ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 1451/ຜ-ຟຟລ
ນະຄອນຫຼວງວຽງຈັນ, ວັນທີ 14 ກໍລະກົດ 2020

ໜັງສືແຈ້ງເຊີນ

ຮຽນ: ທ່ານຜູ້ຖືຮຸ້ນ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2020

- ອີງຕາມມະຕິຕົກລົງ ຂອງ ກອງປະຊຸມສະພາບໍລິຫານສະໄໝວິສາມັນຄັ້ງທີ 3/2020 ຂອງ ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ, ວັນທີ 14 ກໍລະກົດ 2020.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("**ບໍລິສັດ**") ຂໍຖືເປັນກຽດຮຽນເຊີນທ່ານເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2020 ໃນວັນທີ **24 ກໍລະກົດ 2020** ເວລາ **15:00** ໂມງ (ລົງທະບຽນເວລາ **13:30** ໂມງ), ທີ່ຫ້ອງປະຊຸມຊັ້ນ 1, ອາຄານສຳນັກງານໃຫຍ່ ຂອງລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ. ບໍລິສັດໄດ້ແຈ້ງວັນ, ເວລາ ແລະ ວາລະກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2020 ຜ່ານເວັບໄຊທ໌ ຂອງ ບໍລິສັດ (www.edlgen.com.la) ແລະ ລະບົບຂໍ້ມູນຂ່າວສານ ຂອງ ຕະຫຼາດຫຼັກຊັບ ລາວ (www.lsx.com.la).

ບໍລິສັດໄດ້ກຳນົດວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດລາຍຊື່ຂອງຜູ້ຖືຮຸ້ນ ທີ່ມີສິດເຂົ້າຮ່ວມກອງປະຊຸມ ວິສາມັນຜູ້ຖືຮຸ້ນຄັ້ງທີ 1/2020, ໃນວັນທີ **10 ກໍລະກົດ 2020**, ຊຶ່ງໄດ້ເປີດເຜີຍໃຫ້ບັນດາທ່ານຊາບແລ້ວ.

ຫວັງວ່າທ່ານຄົງສະຫຼະເວລາອັນມີຄ່າ ເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

ດ້ວຍຄວາມນັບຖືເປັນຢ່າງສູງ,
ປະທານສະພາບໍລິຫານ

ພະລັງງານ ແລະ ບ່ອ ... ທະນ... ... ...

ເອກະສານຄັດຕິດ:

1. ວາລະກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2020.
2. ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019.
3. ຊີວະປະຫວັດຫຍໍ້ຂອງຮອງປະທານສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ພ້ອມດ້ວຍຄະນະ.
4. ໃບມອບສັນທະ.
5. ເອກະສານ ແລະ ຫຼັກຖານທີ່ຜູ້ເຂົ້າຮ່ວມກອງປະຊຸມຕ້ອງໃຊ້ເພື່ອການສະເໜີໂຕໃນການເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມວິສາມັນຜູ້ຖືຮຸ້ນ.
6. ແຜນທີ່ ຂອງສະຖານທີ່ຈັດກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2020.

ໝາຍເຫດ:

1. ເນື່ອງຈາກສະພາບການແຜ່ລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ໄດ້ຂະຫຍາຍເປັນວົງກວ້າງໃນຫຼາຍປະເທດ. ເພື່ອປ້ອງກັນ, ສະກັດກັ້ນບໍ່ໃຫ້ມີການຕິດເຊື້ອ ແລະ ແຜ່ລະບາດ, ຂໍແຈ້ງມາຍັງບັນດາທ່ານຜູ້ຖືຮຸ້ນຊາບຄື:
   1.1 ຜູ້ຖືຮຸ້ນທຸກໆທ່ານ ສາມາດດາວໂຫຼດເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດໃນເວັບໄຊທ໌ ຂອງບໍລິສັດ ແລະ ເວັບໄຊທ໌ ຂອງຕະຫຼາດຫຼັກຊັບລາວ ຫຼື ໄປຮັບເອົາໜັງສືເຊີນພ້ອມເອກະສານຄັດຕິດຢູ່ຕະຫຼາດຫຼັກຊັບ ລາວ ຊັ້ນ 4 ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານໂພນທັນເໜືອ, ຖະໜົນ T4, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ. ໂທລະສັບ +85621 454361-4. ເລີ່ມແຕ່ວັນທີ **14 ກໍລະກົດ 2020.**
   1.2 ຜູ້ຖືຮຸ້ນສາມາດສົ່ງຄຳຖາມທີ່ຕິດພັນກັບວາລະກອງປະຊຸມຜູ້ຖືຮຸ້ນມາກ່ອນມື້ປະຊຸມ ແລະ ບໍລິສັດຈະຕອບຄຳຖາມໃນບົດບັນທຶກກອງປະຊຸມ.
   1.3 ສະເໜີຜູ້ຖືຮຸ້ນມອບໝາຍໃຫ້ກຳມະການອິດສະຫຼະ ຂອງບໍລິສັດ ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສັນທະ ຕາມ **ເອກະສານຄັດຕິດ 4** ທີ່ໄດ້ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ ແລະ ໝາຍ (✔) ເພື່ອເລືອກເອົາກຳມະການອິດສະຫຼະຂອງບໍລິສັດທ່ານໃດໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສັນທະດັ່ງກ່າວພ້ອມເອກະສານປະກອບມາທາງທີ່ຢູ່ອີເມລຂອງບໍລິສັດ: edlgenhq@edlgen.com.la ຫຼື ໄປສະນີເຖິງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນຊັ້ນ 07, **ພະແນກເລຂານຸການບໍລິສັດ**, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ.2392. ແລະ **ກະລຸນາສົ່ງກ່ອນວັນທີ 24 ກໍລະກົດ 2020.**
2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼືໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ.
3. ສຳລັບຜູ້ຕາງໜ້າທີ່ຈະເຂົ້າຮ່ວມປະຊຸມຈະຕ້ອງນຳເອກະສານ ຫຼືຫຼັກຖານ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມຕາມລາຍລະອຽດທີ່ໄດ້ລະບຸໄວ້ໃນ **ເອກະສານຄັດຕິດ 5** ທີ່ໄດ້ຄັດຕິດມາພ້ອມນີ້ ແລະ ສົ່ງມອບໃຫ້ປະທານໃນກອງປະຊຸມ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກປະທານ, ຜູ້ຕາງໜ້າຈຶ່ງເຂົ້າຮ່ວມກອງປະຊຸມໄດ້.
4. ຖ້າຫາກທ່ານມີຂໍ້ສົງໄສ ຫຼື ຄຳຖາມກ່ຽວກັບການມອບສັນທະ, ທ່ານສາມາດສອບຖາມ ທ່ານ ນາງ ໂພຄົນ ອັບໄພ ໂທ: (856-20) 5454 9978, ທ່ານ ບຸນເກີດ ໄຊຍະສອນ ໂທ: (856-20) 2224 8202 ແລະ ທ່ານ ພຸດທະສອນ ອິນທະປັນຍາ ໂທ: (856-20) 5554 1155 ໃນໂມງລັດຖະການ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ວາລະທີ 1. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019.

ລາຍລະອຽດ:

ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ໄດ້ຈັດຂຶ້ນໃນວັນທີ **29 ພຶດສະພາ 2020**, ຊຶ່ງບໍລິສັດໄດ້ມີການບັນທຶກກອງປະຊຸມດັ່ງກ່າວມີລາຍລະອຽດໃນ **ເອກະສານຄັດຕິດ 2** ທີ່ໄດ້ຄັດຕິດມາພ້ອມນີ້.

ຄຳເຫັນຂອງສະພາບໍລິຫານ:

ບົດບັນທຶກກອງປະຊຸມ ມີຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ ເຫັນດີໃຫ້ກອງປະຊຸມວິສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019, ວັນທີ 29 ພຶດສະພາ 2020.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 2. ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ອຳນວຍການໃຫຍ່ຜູ້ໃໝ່ ພ້ອມດ້ວຍຄະນະ ເພື່ອປ່ຽນແທນຜູ້ອຳນວຍການໃຫຍ່ຜູ້ເກົ່າ ພ້ອມດ້ວຍຄະນະທີ່ເຂົ້າຮັບກະສຽນບຳເນັດ.

ລາຍລະອຽດ:

ໂດຍອີງຕາມແຜນການດຳເນີນທຸລະກິດຂອງບໍລິສັດທີ່ນັບມື້ຈະເຕີບໃຫຍ່ຂຶ້ນເລື້ອຍໆ ແລະ ເພື່ອເຮັດໃຫ້ການດຳເນີນທຸລະກິດຂອງບໍລິສັດບັນລຸເປົ້າໝາຍທີ່ວາງໄວ້. ບໍລິສັດເຫັນສົມຄວນ ສະເໜີແຕ່ງຕັ້ງຜູ້ອຳນວຍການໃຫຍ່ຜູ້ໃໝ່ ພ້ອມດ້ວຍຄະນະ, ໂດຍມີຊີວະປະຫວັດຫຍໍ້ ໃນເອກະສານຄັດຕິດ 3 ແລະ ມີລາຍຊື່ດັ່ງລຸ່ມນີ້:

1) ແຕ່ງຕັ້ງ ທ່ານ ດວງສີ ພາຣະຍົກ ເປັນຜູ້ອຳນວຍການໃຫຍ່ຜູ້ໃໝ່ ເພື່ອສືບຕໍ່ປະຕິບັດໜ້າທີ່ບໍລິຫານບໍລິສັດ ແທນຜູ້ອຳນວຍການໃຫຍ່ຜູ້ເກົ່າ.
2) ແຕ່ງຕັ້ງຮອງຜູ້ອຳນວຍການໃຫຍ່ 04 ທ່ານຄື:

(1). ທ່ານ ທອງເພັດ ດ້ວງເງິນ ເປັນຮອງຜູ້ອຳນວຍການໃຫຍ່;

(2). ທ່ານ ວິງສະກຸນ ຍິ່ງຍົງ ເປັນຮອງຜູ້ອຳນວຍການໃຫຍ່;

(3). ທ່ານ ນາງ ສຸກສັນ ພົງພິລາ ເປັນຮອງຜູ້ອຳນວຍການໃຫຍ່;

(4). ທ່ານ ວັນແສງ ວັນນະວົງ ເປັນຮອງຜູ້ອຳນວຍການໃຫຍ່ ສາຍງານການເງິນ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມພິຈາລະນາຮັບຮອງການແຕ່ງຕັ້ງຜູ້ອຳນວຍການໃຫຍ່ຜູ້ໃໝ່ ພ້ອມດ້ວຍຄະນະ ດັ່ງກ່າວຂ້າງເທິງ.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ວາລະທີ 3. ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຮອງປະທານສະພາບໍລິຫານ ແລະ ກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າທີ່ເຂົ້າກະສຽນບຳເນັດ, ການກຳນົດຜູ້ມີອຳນາດໃນການລົງລາຍເຊັນຜູກພັນບໍລິສັດ ແລະ ອາຍຸການຂອງບັນດາກຳມະການສະພາບໍລິຫານບໍລິສັດ.

<u>ລາຍລະອຽດ:</u>

ເພື່ອເຮັດໃຫ້ການຄຸ້ມຄອງບໍລິຫານບໍລິສັດໄດ້ດຳເນີນໄປຢ່າງຕໍ່ເນື່ອງ, ບໍລິສັດເຫັນສົມຄວນສະເໜີກອງປະຊຸມພິຈາລະນາຮັບຮອງການແຕ່ງຕັ້ງຮອງປະທານສະພາບໍລິຫານ ແລະ ກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າທີ່ເຂົ້າກະສຽນບຳເນັດ ແລະ ການກຳນົດຜູ້ທີ່ມີອຳນາດໃນການລົງລາຍເຊັນຜູກພັນບໍລິສັດ ແລະ ອາຍຸການຂອງບັນດາກຳມະການສະພາບໍລິຫານບໍລິສັດດັ່ງນີ້:

1. ແຕ່ງຕັ້ງທ່ານ ຈັນທະບຸນ ສຸກອາລຸນ ຜູ້ວ່າການຜູ້ອຳນວຍການໃຫຍ່ລັດວິສາຫະກິດໄຟຟ້າລາວ ເປັນຮອງປະທານສະພາບໍລິຫານ ເພື່ອປ່ຽນແທນຮອງປະທານສະພາບໍລິຫານຜູ້ເກົ່າ ທີ່ເຂົ້າກະສຽນບຳເນັດ.
2. ແຕ່ງຕັ້ງທ່ານ ດວງສີ ພາຣະຍົກ ຜູ້ອຳນວຍການໃຫຍ່ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນເປັນກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນກຳມະການສະພາບໍລິຫານຜູ້ເກົ່າ ທີ່ເຂົ້າກະສຽນບຳເນັດ.

ແລະ ກຳນົດຜູ້ມີອຳນາດໃນການລົງລາຍເຊັນສັນຍາຜູກພັນບໍລິສັດດັ່ງນີ້:

ກ). ໃຫ້ປະທານສະພາບໍລິຫານ, ຮອງປະທານສະພາບໍລິຫານ ຫລື ຜູ້ອຳນວຍການໃຫຍ່ ເປັນຜູ້ມີອຳນາດໃນການລົງລາຍເຊັນຜູກພັນບໍລິສັດ ປະທັບກາບໍລິສັດແຕ່ຝ່ຽງຜູ້ດຽວ ຫລື;

ຂ). ໃຫ້ກຳມະການທ່ານອື່ນ ສອງທ່ານລົງລາຍເຊັນຮ່ວມກັນ ແລະ ປະທັບກາບໍລິສັດ.

ແລະ ກຳນົດອາຍຸການຂອງກຳມະການສະພາບໍລິຫານທັງໝົດບໍ່ເກີນສອງປີ ໂດຍເລີ່ມນັບແຕ່ມື້ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2020 ເປັນຕົ້ນໄປ.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມພິຈາລະນາຮັບຮອງການແຕ່ງຕັ້ງຮອງປະທານສະພາບໍລິຫານ ແລະ ກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າທີ່ເຂົ້າກະສຽນບຳເນັດ ແລະ ການກຳນົດຜູ້ມີອຳນາດລົງລາຍເຊັນຜູກພັນບໍລິສັດ ແລະ ອາຍຸການຂອງບັນດາກຳມະການສະພາບໍລິຫານບໍລິສັດດັ່ງກ່າວຂ້າງເທິງ.

<u>ຄະແນນສຽງທີ່ຕ້ອງໃຊ້:</u>

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4. ພິຈາລະນາ ແລະ ຮັບຮອງການດັດແກ້ກົດລະບຽບຂອງບໍລິສັດມາດຕາ 9 ວ່າດ້ວຍກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ.

<u>ລາຍລະອຽດ:</u>

ເນື່ອງຈາກມີການປ່ຽນແປງຜູ້ອຳນວຍການໃຫຍ່ ຂອງບໍລິສັດ ແລະ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງບໍລິຫານ ຂອງບໍລິສັດ ດຳເນີນການໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ກ່ຽວຂ້ອງ, ສະເໜີກອງປະຊຸມພິຈາລະນາຮັບຮອງການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ມາດຕາ 9 ວ່າດ້ວຍ ກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ; ລາຍລະອຽດມີດັ່ງນີ້:

1) <u>ດັດແກ້ມາດຕາ 9 ວ່າດ້ວຍກຳມະການ:</u> ປ່ຽນຊື່ ແລະ ຂໍ້ມູນຂອງກຳມະການ 02 ທ່ານດັ່ງນີ້:

ກ. ຜູ້ຖືຮຸ້ນເປັນກຳມະການ:

1. ຊື່ ແລະ ນາມສະກຸນ: ທ່ານ ຈັນທະບຸນ ສຸກອາລຸນ
   - ສັນຊາດ: ລາວ;
   - ທີ່ຢູ່ປະຈຸບັນ: ເຮືອນເລກທີ 393, ໜ່ວຍ 16, ບ້ານ ດອນກອຍ, ເມືອງ ສີສັດຕະນາກ, ແຂວງ ນະຄອນຫຼວງວຽງຈັນ.
2. ຊື່ ແລະ ນາມສະກຸນ: ທ່ານ ດວງສີ ພາຣະຍົກ
   - ສັນຊາດ: ລາວ;
   - ທີ່ຢູ່ປະຈຸບັນ: ເຮືອນເລກທີ 326, ໜ່ວຍ 07, ບ້ານ ສາລະຄຳເໜືອ, ເມືອງ ຫາດຊາຍຟອງ, ແຂວງ ນະຄອນຫຼວງວຽງຈັນ.

2) <u>ດັດແກ້ມາດຕາ 12 ວ່າດ້ວຍສະພາບໍລິຫານ:</u> ປ່ຽນຊື່ ແລະ ຂໍ້ມູນ ຂອງຮອງປະທານສະພາບໍລິຫານຄື:

1. ຮອງປະທານສະພາບໍລິຫານ ຊື່ ແລະ ນາມສະກຸນ: ທ່ານ ຈັນທະບຸນ ສຸກອາລຸນ

ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ໃນເລື່ອງດັ່ງກ່າວຂ້າງເທິງ ລວມທັງມີອຳນາດດັດແກ້ເນື້ອໃນກົດລະບຽບຂອງບໍລິສັດຕາມທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ/ຫຼື ເຈົ້າໜ້າທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວມີຄຳແນະນຳ ແລະ/ຫຼື ຄຳສັ່ງໃຫ້ດັດແກ້.

<u>**ຄຳເຫັນຂອງສະພາບໍລິຫານ:**</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມພິຈາລະນາຮັບຮອງເອົາການດັດແກ້ກົດລະບຽບ ຂອງບໍລິສັດ ມາດຕາ 9 ແລະ ມາດຕາ 12, ດັ່ງກ່າວຂ້າງເທິງ.

<u>**ຄະແນນສຽງທີ່ຕ້ອງໃຊ້:**</u>

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນ ຫລື ຜູ້ຕາງໜ້າຜູ້ຖືຮຸ້ນຢ່າງໜ້ອຍ ສອງສ່ວນສາມ (2/3) ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະມີຮຸ້ນລວມກັນຢ່າງໜ້ອຍ (80%) ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
ກອງປະຊຸມສາມັນຜູ້ຖືຮຸ້ນ

ນະຄອນຫຼວງວຽງຈັນ, ວັນທີ 12/06/2020

ບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019
ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ປະຊຸມເມື່ອວັນທີ 29 ພຶດສະພາ 2020 ເວລາ 15:00 ໂມງ ທີ່ຫ້ອງປະຊຸມໃຫຍ່ຊັ້ນ 1, ສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂດຍ ທ່ານ ປອ. ຄຳມະນີ ອິນທິລາດ ປະທານສະພາບໍລິຫານ ບໍລິສັດ ເປັນປະທານກອງປະຊຸມ; ກອງປະຊຸມມີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມດ້ວຍຕົນເອງຈຳນວນ 41 ທ່ານ ແລະ ມອບສັນທະຈຳນວນ 145 ທ່ານ, ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 186 ທ່ານ ຖືຮຸ້ນລວມກັນທັງໝົດ 1.454.782.712 ຮຸ້ນ ເທົ່າກັບ 86,63 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການ ຂອງ ບໍລິສັດ.

ປະທານກອງປະຊຸມ ໄດ້ແນະນຳກຳມະການສະພາບໍລິຫານແຕ່ລະທ່ານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງທີ່ເຂົ້າຮ່ວມປະຊຸມ ດັ່ງນີ້:

1.	ທ່ານ ປອ. ຄຳມະນີ ອິນທິລາດ	ຕຳແໜ່ງ:	ປະທານສະພາບໍລິຫານບໍລິສັດ/ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່
2.	ທ່ານ ບຸນອຸ້ມ ສີວັນເພັ້ງ	ຕຳແໜ່ງ:	ຮອງປະທານສະພາບໍລິຫານບໍລິສັດ/ ຜູ້ອຳນວຍການ ໃຫຍ່ ລັດວິສາຫະກິດໄຟຟ້າລາວ;
3.	ທ່ານ ນາງ ລັດຕະນາ ປະທຸມວັນ	ຕຳແໜ່ງ:	ກຳມະການສະພາບໍລິຫານ/ຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ;
4.	ທ່ານ ບຸນມາ ມະນີວົງ	ຕຳແໜ່ງ:	ກຳມະການສະພາບໍລິຫານ;
5.	ທ່ານ ນາງ ວານິດາ ສະຫວັດດີ	ຕຳແໜ່ງ:	ກຳມະການສະພາບໍລິຫານ/ຮອງຫົວໜ້າກົມ ຄຸ້ມຄອງການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ ກະຊວງການເງິນ;
6.	ທ່ານ ສີຈາດ ບຸດຊາກິດຕິລາດ	ຕຳແໜ່ງ:	ກຳມະການສະພາບໍລິຫານ;
7.	ທ່ານ ຮສ. ປອ. ກອງສີ ແສງມະນີ	ຕຳແໜ່ງ:	ກຳມະການອິດສະຫຼະ/ຮອງລັດຖະມົນຕີ ກະຊວງ ສຶກສາທິການ ແລະ ກິລາ;

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

8. **ທ່ານ ສຈ. ປອ. ຄຳລຶຊາ ນອນສະຫວັນ** ຕຳແໜ່ງ: ກຳມະການອິດສະຫຼະ;

9. **ທ່ານ ຣສ. ຄຳເພີ ພົມມະຈັນ** ຕຳແໜ່ງ: ກຳມະການອິດສະຫຼະ/ຫົວໜ້າຫ້ອງການແຜນການການເງິນ, ມະຫາວິທະຍາໄລແຫ່ງຊາດ;

ນອກຈາກນັ້ນ, ທ່ານປະທານໄດ້ກ່າວ ແລະ ແນະນຳໃຫ້ຜູ້ເຂົ້າຮ່ວມກອງປະຊຸມຮັບຊາບຕື່ມອີກວ່າ: ເນື່ອງຈາກສະພາບການລະບາດຂອງພະຍາດອັກເສບປອດ ຈາກເຊື້ອຈຸລະໂລກສາຍພັນໃໝ່ ຫຼື COVID-19 ທີ່ກຳລັງເປັນໄພຄຸກຄາມ ແລະ ຍັງສືບຕໍ່ການລະບາດຢູ່ໃນໂລກ. ສຳລັບຢູ່ ສປປ ລາວ ກໍຄື ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ພວກເຮົາ ກໍໄດ້ປະຕິບັດຕາມຄຳສັ່ງ ຂອງ ທ່ານນາຍົກລັດຖະມົນຕີເລກທີ 06/ນຍ, ຄຳແນະນຳຂອງຄະນະສະເພາະກິດ, ແລະ ປະຕິບັດຕາມນິຕິກຳອື່ນໆທີ່ກ່ຽວຂ້ອງ ທີ່ທາງລັດຖະບານ ແລະ ຄະນະສະເພາະກິດ ໄດ້ອອກນະໂຍບາຍຕ່າງໆ ມາເປັນແຕ່ລະໄລຍະ. ເຖິງແມ່ນວ່າຕົວເລກຜູ້ຕິດເຊື້ອຈະຢູ່ຄົງທີ່ ແຕ່ພວກເຮົາກໍຕ້ອງໄດ້ສືບຕໍ່ມາດຕະການປ້ອງກັນ, ສະກັດກັ້ນ ແລະ ຄວບຄຸມ ເພື່ອຮັບມືກັບການລະບາດຂອງພະຍາດດັ່ງກ່າວ ທີ່ອາດຈະເກີດຂຶ້ນໄດ້ອີກຮອບໃໝ່.

ສະນັ້ນ ການຈັດກອງປະຊຸມສາມັນຜູ້ຖືຮຸ້ນໃນປີນີ້ ຈະມີຄວາມແຕກຕ່າງຈາກແຕ່ລະປີທີ່ຜ່ານມາ; ເປັນຕົ້ນພວກເຮົາໄດ້ມີການແນະນຳໃຫ້ບັນດາທ່ານຜູ້ຖືຮຸ້ນ ດາວໂຫລດເອົາບັດເຊີນເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ຢູ່ທີ່ເວັບໄຊທ໌ຂອງບໍລິສັດ ແລະ ເວັບໄຊທ໌ຂອງ ຕະຫລາດຫລັກຊັບລາວ, ເຊິ່ງໄດ້ແນະນຳໃຫ້ບັນດາທ່ານຜູ້ຖືຮຸ້ນ ມອບສັນທະໃຫ້ກຳມະການອິດສະຫຼະຂອງບໍລິສັດ ເຂົ້າຮ່ວມປະຊຸມແທນ. ພ້ອມກັນນັ້ນ ພວກເຮົາກໍໄດ້ແຈ້ງບັນດາທ່ານຜູ້ຖືຮຸ້ນສົ່ງຄຳຖາມກ່ຽວກັບວາລະກອງປະຊຸມມາລ່ວງໜ້າກອງປະຊຸມຄັ້ງນີ້ ແລະ ບໍລິສັດຈະຕອບຄຳຖາມດັ່ງກ່າວໃນບົດບັນທຶກກອງປະຊຸມຜູ້ຖືຮຸ້ນຄັ້ງນີ້.

ການປະຕິບັດກ່ອນເຂົ້າຫ້ອງປະຊຸມ ກໍໄດ້ມີການວັດແທກອຸນຫະພູມ ຕາມການແນະນຳຂອງໜ່ວຍງານສະເພາະກິດ ກໍຄື ກະຊວງສາທາລະນະສຸກ. ສຳລັບຕັ່ງນັ່ງ ກໍໄດ້ມີການເວັ້ນໄລຍະຫ່າງຄືດັ່ງທີ່ທ່ານເຫັນ ແລະ ຂໍຮ່ວມມືນຳບັນດາທ່ານບໍ່ໃຫ້ເຄື່ອນຍ້າຍຕັ່ງທີ່ໄດ້ຈັດວາງໄວ້ແລ້ວນັ້ນ ໂດຍເດັດຂາດ ເພື່ອຮັກສາໄລຍະຫ່າງຂອງບັນດາທ່ານໃນຫ້ອງປະຊຸມ. ບໍລິສັດຂໍແຈ້ງບັນດາທ່ານວ່າ ໃນກອງປະຊຸມຄັ້ງນີ້ ກໍໄດ້ງົດຈັດຊຸ້ມອາຫານຫວ່າງ ແລະ ງົດແຈກຂອງທີ່ລະນຶກ ເພື່ອຫຼີກລ່ຽງການສຳຜັດວັດຖຸສິ່ງຂອງຮ່ວມກັບຜູ້ອື່ນ ເພື່ອຄວາມປອດໄພ ແລະ ສຸຂະພາໄມຂອງທຸກທ່ານ.

ພ້ອມດຽວກັນນີ້, ກໍຍັງມີ ທ່ານຜູ້ຕາງໜ້າຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຜູ້ຕາງໜ້າຈາກຕະຫຼາດຫຼັກຊັບລາວ, ບັນດາທ່ານຮອງຜູ້ອຳນວຍການໃຫຍ່ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ຮອງຜູ້ອຳ ນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ, ຕາງໜ້າຜູ້ກວດສອບບັນຊີພາຍນອກ, ຄະນະກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ, ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ ເຂົ້າຮ່ວມກອງປະຊຸມ ແລະ ຄະນະກຳມະການກວດສອບພາຍໃນ ຂອງ ບໍລິສັດ ເຂົ້າຮ່ວມກອງປະຊຸມຄັ້ງນີ້.

ຫຼັງຈາກນັ້ນ ປະທານກອງປະຊຸມ ໄດ້ມອບໃຫ້ ທ່ານ ນາງ ລັດຕະນາ ປະທຸມວັນ ຜູ້ອຳນວຍການໃຫຍ່ ຂອງບໍລິສັດ ອະທິບາຍກ່ຽວກັບວິທີການລົງຄະແນນສຽງໃຫ້ທີ່ປະຊຸມຊາບ ແລະ ລາຍງານແຕ່ລະວາລະຂອງການປະຊຸມ, ຊຶ່ງລາຍລະອຽດມີດັ່ງນີ້:

1. **ການລົງຄະແນນສຽງ**:

- ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່ ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
- ໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ ປະທານຈະຖາມກອງປະຊຸມວ່າ ມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

* ຖ້າຫາກມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ທ່ານນັ້ນກາເຄື່ອງໝາຍໃສ່ຊ່ອງການລົງມະຕິບໍ່ເຫັນດີ ໃນບັດລົງຄະແນນທີ່ເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າປະຊຸມ ແລະ ຍົກບັດທີ່ກາເຄື່ອງໝາຍນັ້ນຂຶ້ນສູງໆ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບບັດລົງຄະແນນ ເພື່ອນຳໄປກວດນັບຄະແນນສຽງໃນວາລະນັ້ນໆ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດ ຖືວ່າຜູ້ຖືຮຸ້ນທ່ານນັ້ນ ມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ.
* ຖ້າຫາກບໍ່ມີຜູ້ຖືຮຸ້ນທ່ານໃດຍົກບັດ ໃຫ້ຖືວ່າເຫັນດີ ຕາມເລື່ອງທີ່ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ, ຍົກເວັ້ນກໍລະນີທີ່ຜູ້ຖືຮຸ້ນໄດ້ເຮັດເຄື່ອງໝາຍ ໃນໃບມອບສັນທະໄວ້ຢ່າງຈະແຈ້ງແລ້ວວ່າ ຈະລົງມະຕິບໍ່ເຫັນດີ, ຊຶ່ງບໍລິສັດໄດ້ບັນທຶກຄະແນນສຽງທີ່ບໍ່ເຫັນດີດັ່ງກ່າວນັ້ນໄວ້ແລ້ວ.

- ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງ ຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສັນທະນັ້ນ, ບໍລິສັດໄດ້ນຳເອົາການລົງຄະແນນສຽງຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສັນທະດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າ ໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງ ໃນບັດລົງຄະແນນໃນກອງປະຊຸມຕື່ມອີກ.

2. ການນັບຜົນການລົງຄະແນນສຽງ:

- ການນັບຜົນການລົງຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມປະຊຸມ ທີ່ອອກສຽງບໍ່ເຫັນດີ ມາຫັກລົບອອກຈາກຈຳນວນຮຸ້ນທັງໝົດ ຂອງຜູ້ທີ່ມາເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ.
- ປະທານກອງປະຊຸມຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະ ໃຫ້ກອງປະຊຸມຮັບຊາບ ຫຼັງຈາກການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ ໂດຍຈະແຍກຄະແນນສຽງເຫັນດີ ແລະ ບໍ່ເຫັນດີວ່າມີຈັກສຽງ ແລະ ເປັນຈຳນວນຈັກສ່ວນຮ້ອຍ, ກໍລະນີມີຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງຈາກທີ່ປະທານໄດ້ປະກາດ ໃຫ້ກອງປະຊຸມຮັບຊາບຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດ ຈະບໍ່ນຳເອົາຄະແນນສຽງດັ່ງກ່າວ ມານັບເປັນຄະແນນສຽງຕື່ມອີກ.

ໂດຍອີງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ, ໃນກອງປະຊຸມສາມັນຜູ້ຖືຮຸ້ນ ຂອງ ບໍລິສັດໃນຄັ້ງນີ້ ບໍ່ອະນຸຍາດໃຫ້ຜູ້ສັງເກດການ ມີຄຳຖາມໃນເວລາດຳເນີນການປະຊຸມ, ມີພຽງແຕ່ຜູ້ຖືຮຸ້ນເທົ່ານັ້ນມີສິດຕັ້ງຄຳຖາມ ແລະ ປະກອບຄຳຄິດຄຳເຫັນ ກ່ຽວກັບວາລະການປະຊຸມ.

ຫຼັງຈາກນັ້ນ, ຜູ້ອຳນວຍການໃຫຍ່ ໄດ້ເລີ່ມເຂົ້າສູ່ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ໂດຍໄດ້ລາຍງານເປັນແຕ່ລະວາລະ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

ວາລະທີ 1. ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນປະຈຳປີຜ່ານມາ

ຜູ້ອຳນວຍການໃຫຍ່ໄດ້ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນປະຈຳປີຜ່ານມາເພື່ອໃຫ້ຜູ້ຖືຮຸ້ນຮັບຊາບເຖິງຜົນສຳເລັດ ການຈັດຕັ້ງປະຕິບັດມະຕິກອງປະຊຸມດັ່ງກ່າວຄື: ກ່ຽວກັບວາລະທີ 1, 2, 3, 4, 5, ແລະ 6 ແມ່ນໄດ້ຈັດຕັ້ງປະຕິບັດຕາມແຜນການເຫັນດີ ຂອງປະຊຸມສາມັນຜູ້ຖືຮຸ້ນແລ້ວ. ແລະ ວາລະທີ 7 ກ່ຽວກັບການອະນຸມັດລົງທຶນໃນໂຄງການ EDL-Gen Energy Complex Plaza ເຊິ່ງປັດຈຸບັນ ແມ່ນກຳລັງດຳເນີນເອກະສານທາງດ້ານນິຕິກຳຕ່າງໆເປັນຕົ້ນແມ່ນການຂໍອະນຸມັດກໍ່ສ້າງຈາກພະແນກໂຍທາທິການ ແລະ ຂົນສົ່ງນະຄອນຫຼວງວຽງຈັນ. ສຳລັບວຽກງານດ້ານການເງິນກຳລັງລໍຖ້າອະນຸມັດເງິນກູ້ຢືມຈາກທະນາຄານ ICBC, ສ່ວນວຽກດ້ານການອອກແບບໄດ້

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ສຳເລັດ Concept Design, Basic Design ແລະ Detail Design ແລະ ສຳເລັດສັນຍາຜູ້ຮັບເໝົາຫຼັກ (Head Contractor).

ຫຼັງຈາກຜູ້ອຳນວຍການໃຫຍ່ ໄດ້ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 1 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຕໍ່ມາ ປະທານກອງປະຊຸມ ໄດ້ແຈ້ງໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນຊາບວ່າ, ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມດັ່ງກ່າວ ແມ່ນລາຍງານໃຫ້ຜູ້ຖືຮຸ້ນຮັບຊາບເທົ່ານັ້ນ, ວາລະນີ້ແມ່ນບໍ່ມີການລົງຄະແນນສຽງ.

ກອງປະຊຸມໄດ້ຮັບຊາບຕາມການລາຍງານ ຂອງ ຜູ້ອຳນວຍການໃຫຍ່ ກ່ຽວກັບການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນປະຈຳປີຜ່ານມາທຸກປະການ.

ວາລະທີ 2. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018

ຜູ້ອຳນວຍການໃຫຍ່ ໄດ້ລາຍງານຕໍ່ທີ່ປະຊຸມກ່ຽວກັບບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018, ໄດ້ປະຊຸມເມື່ອວັນທີ 09 ເມສາ 2019 ໂດຍມີລາຍລະອຽດໃນເອກະສານຄັດຕິດ ເຊິ່ງໄດ້ຄັດຕິດພ້ອມກັບໜັງສືແຈ້ງເຊີນ ແລະ ສະພາບລິຫານ ໄດ້ຮັບຮອງຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ, ເຫັນດີສະເໜີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນດັ່ງກ່າວ.

ຫຼັງຈາກ ຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 2 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ປະທານໄດ້ສະເໜີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018 ດັ່ງກ່າວ, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: **ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018, ວັນທີ 09 ເມສາ 2019, ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:**

- **ເຫັນດີຈຳນວນ 1.454.936.412 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ**

ວາລະທີ 3. ພິຈາລະນາ ແລະ ຮັບຮອງລາຍງານການເງິນ 6 ເດືອນຕົ້ນປີ 2019 ແລະ ການບໍ່ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2019

ຜູ້ອຳນວຍການໃຫຍ່ ໄດ້ລາຍງານຕໍ່ທີ່ປະຊຸມ ອີງຕາມການມອບອຳນາດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2012 ຄັ້ງວັນທີ 22 ເມສາ 2013, ການເຄື່ອນໄຫວທຸລະກິດຂອງບໍລິສັດ ໃນ 6 ເດືອນຕົ້ນປີ 2019 ຂາດທຶນທັງໝົດ 147,15 ຕື້ກີບ, ຊຶ່ງຜູ້ກວດສອບພາຍນອກໄດ້ມີການທົບທວນແລ້ວ ແລະ ບໍລິສັດໄດ້ເປີດເຜີຍລາຍງານດັ່ງກ່າວ ໃນເວັບໄຊທ໌ຂອງຕະຫລາດຫລັກຊັບລາວ ແລະ ເວັບໄຊທ໌ຂອງບໍລິສັດແລ້ວ.

ບໍລິສັດບໍ່ອະນຸມັດຈ່າຍເງິນປັນຜົນ 6 ເດືອນຕົ້ນປີ 2019 ໃຫ້ຜູ້ຖືຮຸ້ນ ເນື່ອງຈາກວ່າບໍ່ມີກຳໄລໃນການດຳເນີນທຸລະກິດ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງເອົາລາຍງານການເງິນ 6 ເດືອນຕົ້ນປີ 2019 ແລະ ການບໍ່ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນ ປີ 2019.

ຫຼັງຈາກຜູ້ອຳນວຍການໃຫຍ່ ໄດ້ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 3 ແລ້ວ, ປະທານກອງປະຊຸມ ໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນ ທ່ານໃດມີຄຳຖາມ.

ຈາກນັ້ນ ປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ຮັບຮອງເອົາລາຍງານການເງິນ 6 ເດືອນຕົ້ນປີ 2019 ແລະ ການບໍ່ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2019. ວາລະນີ້ກອງປະຊຸມ ຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງ ປະຊຸມ.

ມະຕິ: **ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາລາຍງານການເງິນ 6 ເດືອນ ຕົ້ນປີ 2019 ແລະ ການບໍ່ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2019 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:**

- **ເຫັນດີຈຳນວນ 1.454.908.612 ສຽງ ເທົ່າກັບ 99,9981 ສ່ວນຮ້ອຍ ຂອງຈຳນວນ ສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈຳນວນ 27.800 ສຽງ ເທົ່າກັບ 0,0019 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 4. ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດ ຂອງ ບໍລິສັດ ປີ 2019 ລວມທັງລາຍ ງານການເງິນຂອງບໍລິສັດ ປີ 2019 ແລະ ແຜນການດຳເນີນທຸລະກິດ ຂອງ ບໍລິສັດປີ 2020.

ຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ກອງປະຊຸມກ່ຽວກັບບົດລາຍງານຜົນການດຳ ເນີນທຸລະກິດ ຂອງ ບໍລິສັດ ປີ 2019 ລວມທັງລາຍງານການເງິນ ຂອງ ບໍລິສັດ ປີ 2019 ແລະ ແຜນການດຳເນີນທຸລະກິດຂອງບໍລິສັດປີ 2020 ຊຶ່ງມີດັ່ງລຸ່ມນີ້:

ໃນປີ 2019, ການດຳເນີນທຸລະກິດຂອງບໍລິສັດ ຜະລິດກະແສໄຟຟ້າຂາຍຍົກໃຫ້ ລັດວິສາຫະກິດໄຟຟ້າ ລາວ ຕາມສັນຍາຊື້-ຂາຍໄຟຟ້າ ແລະ ໄດ້ມີການປັບປຸງການຄຸ້ມຄອງບໍລິຫານພາຍໃນບໍລິສັດ ເພື່ອໃຫ້ສອດຄ່ອງ ແລະ ດຳເນີນການ ຕາມກົດລະບຽບ ແລະ ກົດໝາຍຕ່າງໆ ຂອງ ບໍລິສັດມະຫາຊົນ ທີ່ຈົດທະບຽນໃນຕະຫລາດຫລັກຊັບລາວ ແລະ ບໍລິສັດ ໄດ້ເຂົ້າໄປຖືຮຸ້ນໃນ 7 ເຂື່ອນຜູ້ຜະລິດໄຟຟ້າເອກະລາດ ແລະ ບໍລິສັດ EDL-Gen Solar Power ຈຳ ກັດ; ມີທຶນຈົດທະບຽນທັງໝົດ 6.717.214.788.000 ກີບ, ມີຮຸ້ນທັງໝົດ 1.679.303.697 ຮຸ້ນ. ການດຳເນີນ ທຸລະກິດ ໃນປີ 2019 ມີດັ່ງນີ້:

- ກຳລັງຕິດຕັ້ງທັງໝົດ 1.231,2 MW; ໃນນີ້ 699 MW ແມ່ນເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ, 513 MW ແມ່ນການເຂົ້າໄປຖືຮຸ້ນ ໃນບັນດາເຂື່ອນຜູ້ຜະລິດໄຟຟ້າເອກະລາດ, ແລະ 19,2 MW ແມ່ນການ ເຂົ້າໄປຖືຮຸ້ນ ໃນບໍລິສັດ EDL-Gen Solar Power ຈຳກັດ.
- ການຜະລິດທັງໝົດ 4.132,35 GWh;

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

- ລາຍຮັບທັງໝົດຈຳນວນ 1.226,97 ຕື້ກີບ;
- ລາຍຈ່າຍທັງໝົດມີຈຳນວນ 1.433,32 ຕື້ກີບ
- ກຳໄລຕາມສັດສ່ວນການຖືຮຸ້ນຈາກການລົງທຶນ ໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ມີຈຳນວນ 339,38 ຕື້ກີບ;
- ກຳໄລສຸດທິຈາກອັດຕາແລກປ່ຽນ 74,52 ຕື້ກີບ; ແລະ
- ກຳໄລສຸດທິຈຳນວນ 207,55 ຕື້ກີບ.

ສະເພາະລາຍງານການເງິນຂອງບໍລິສັດປີ 2019 ເຊິ່ງຜູ້ກວດສອບບັນຊີພາຍນອກໄດ້ກວດສອບແລ້ວ, ມີລາຍລະອຽດໃນໜັງສືແຈ້ງເຊີນ ແລະ ໄດ້ເປີດເຜີຍໃນເວັບໄຊທ໌ ຂອງຕະຫລາດຫລັກຊັບລາວ ແລະ ເວັບໄຊທ໌ ຂອງ ບໍລິສັດແລ້ວ.

ພ້ອມກັນນັ້ນ ບໍລິສັດຍັງໄດ້ປະຕິບັດຕາມລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ ເຊັ່ນ ໄດ້ມອບຝັນທະໃຫ້ ລັດຖະບານ ປະກອບມີຄ່າພາກຫຼວງ 1% ຂອງລາຍຮັບຈາກການຂາຍກະແສໄຟຟ້າ, ອາກອນກຳໄລ 10%, ອາກອນ ເງິນປັນຜົນ 10% ແລະ ອາກອນລາຍໄດ້ຂອງບຸກຄົນລວມທັງໝົດປະມານ 105,82 ຕື້ກີບ.

ຈຳນວນບຸກຄະລາກອນທັງໝົດແມ່ນ 717 ຄົນ, ໃນນັ້ນ ມີຍິງ 125 ຄົນ. ເຊິ່ງຍາມໃດ ບໍລິສັດກໍໄດ້ໃຫ້ ຄວາມສຳຄັນ ແລະ ໄດ້ເອົາໃຈໃສ່ໃນການພັດທະນາບຸກຄະລາກອນໃຫ້ນັບມື້ນັບເຂັ້ມແຂງ ມີຄວາມຮູ້ຄວາມສາມາດ ເພື່ອກ້າວໄປເຖິງທຽບເທົ່າກັບສາກົນ.

ໃນວັນທີ 23 ພຶດສະພາ 2019, TRIS RATING ໄດ້ຕີລາຄາບໍລິສັດ ແລະ ຮຸ້ນກູ້ບໍ່ດ້ອຍສິດ ບໍ່ມີ ຫລັກປະກັນ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທີ່ລະດັບ "BBB+/ OUTLOOK NEGATIVE" ເຖິງ ຢ່າງໃດກໍຕາມ, ສືບເນື່ອງຈາກການປັບຫຼຸດອັນດັບເຄຼດິດ ຂອງ ສປປ ລາວ ໂດຍ TRIS RATING, ໃນ ວັນທີ 28 ມິຖຸນາ 2019 ເຮັດໃຫ້ການຈັດອັນດັບເຄຼດິດ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ໄດ້ຖືກປັບລົງເຊັ່ນກັນ ຈາກ "BBB+/NAGATIVE" ມາເປັນ "BBB/ OUTLOOK STABLE".

ນອກຈາກນັ້ນ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ໄດ້ມີກົດຈະກຳການລົງທຶນຕ່າງໆ ດັ່ງນີ້:

1. ໄດ້ມີການລົງທຶນຮ່ວມຮຸ້ນກັບນັກລົງທຶນພາຍນອກ ໃນການພັດທະນາໂຄງການກໍ່ສ້າງອາຄານ EDL-Gen Energy Complex Plaza;
2. ສຳເລັດການຮັບໂອນຮຸ້ນ 10% ຂອງເຂື່ອນໄຟຟ້ານ້ຳມັງ 1, 20% ຂອງເຂື່ອນໄຟຟ້າໄຊຍະບູລີ, 20% ຂອງ ເຂື່ອນໄຟຟ້າດອນສະໂຮງ ແລະ 15% ຂອງເຂື່ອນໄຟຟ້ານ້ຳອູ 2, 5, ແລະ 6 ຕາມສັດສ່ວນທີ່ ຟຟລ ຖືຮຸ້ນ;
3. ໄດ້ສຳເລັດການລົງນາມສັນຍາໂອນຮຸ້ນ ໂຄງການເຂື່ອນໄຟຟ້ານ້ຳທາ 1 ລະຫວ່າງ ຟຟລ ແລະ ຜ-ຟຟລ;
4. ໄດ້ເຈລະຈາສັນຍາໂອນຊັບສິນ ໂຄງການ ເຂື່ອນໄຟຟ້ານ້ຳຄານ 3, ເຂື່ອນໄຟຟ້ານ້ຳຈຽນ ແລະ ເຂື່ອນໄຟຟ້າເຊເສັດ 3; ໄດ້ດຳເນີນການເຈລະຈາລາຄາຊື້ຂາຍໄຟຟ້າສຳລັບໂຄງການເຂື່ອນໄຟຟ້ານ້ຳງື່ມ 1 ພາກຂະຫຍາຍ (ຈັກເບີ 6, 7, ແລະ 8); ແລະ
5. ໄດ້ອອກຮຸ້ນກູ້ສະກຸນເງິນບາດທີ່ປະເທດໄທ ໃນວັນທີ 30 ມັງກອນ 2019 ເຊິ່ງສາມາດລະດົມໄດ້ຈຳນວນທັງ ໝົດ 3.839,60 ລ້ານບາດ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ອີງໃສ່ສັນຍາສຳປະທານ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ກໍໄດ້ເອົາໃຈໃສ່ໃນ ວຽກງານສັງຄົມ ແລະ ສິ່ງແວດລ້ອມ, ໄດ້ປະກອບສ່ວນເປັນຈຳນວນຫລາຍສົມຄວນ ພ້ອມທັງໄດ້ສ້າງກິດຈະກຳຮ່ວມກັບ ຊາວບ້ານ ອ້ອມຂ້າງເຂື່ອນທີ່ບໍລິສັດຄຸ້ມຄອງ ເປັນຕົ້ນແມ່ນການປູກຕົ້ນໄມ້ ແລະ ປ່ອຍປາ, ການມອບອຸປະກອນການສຶກສາໃຫ້ ໂຮງຮຽນອ້ອມຂ້າງເຂື່ອນໄຟຟ້າ, ການມອບອຸປະກອນການແພດໃຫ້ສຸກສາລາ ແລະ ການບໍລິຈາກເຄື່ອງນຸ່ງຫົ່ມໃຫ້ ປະຊາຊົນທີ່ຂາດເຂີນຢູ່ອ້ອມຂ້າງເຂື່ອນ ພ້ອມທັງຊ່ວຍເຫຼືອຜູ້ປະສົບໄພພິບັດທາງທຳມະຊາດຕ່າງໆ; ເຊິ່ງລາຍລະອຽດມີ ໃນໜັງສືແຈ້ງເຊີນ ທີ່ໄດ້ເປີດເຜີຍໃຫ້ບັນດາທ່ານຊາບແລ້ວ.

ໃນປີ 2020, ບໍລິສັດຈະປະຕິບັດວຽກງານ ແລະ ດຳເນີນທຸລະກິດໂດຍອີງຕາມນະໂຍບາຍອັນຊັດເຈນ ຂອງບໍລິສັດໃນການຕອບສະໜອງເງິນປັນຜົນຢ່າງສົມເຫດສົມຜົນໃຫ້ຜູ້ຖືຮຸ້ນ ພ້ອມທັງເຮັດໃຫ້ການດຳເນີນທຸລະກິດ ການຜະລິດກະແສໄຟຟ້າ ມີຄວາມໝັ້ນຄົງຢ່າງຕໍ່ເນື່ອງ ແລະ ບໍລິສັດ ຈະໄດ້ສືບຕໍ່ວາງແຜນການດຳເນີນທຸລະກິດ ດ້ວຍ ຕົວເລກຄາດໝາຍ ທີ່ອາດມີຄວາມເປັນໄປໄດ້ໃນເບື້ອງລາຍຮັບ ແລະ ໄດ້ວາງຕົວເລກຄາດໝາຍຢ່າງຮັດກຸມໃນເບື້ອງ ລາຍຈ່າຍ ແລະ ຄາດວ່າບໍລິສັດມີແຜນຈະສືບຕໍ່ລົງທຶນໃນບັນດາເຂື່ອນໄຟຟ້າຕ່າງໆ ເຊັ່ນ:

1). ໂຄງການທີ່ ລັດວິສາຫະກິດໄຟຟ້າລາວ ລົງທຶນ.
2). ໂຄງການທີ່ ລັດວິສາຫະກິດໄຟຟ້າລາວ ເຂົ້າຖືຮຸ້ນ.
3). ໂຄງການທີ່ບໍລິສັດມີແຜນຈະລົງທຶນ ແລະ ເຂົ້າຮ່ວມທຶນ ກັບຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ.

ລາຍລະອຽດໃນໜັງສືແຈ້ງເຊີນ ທີ່ໄດ້ເປີດເຜີຍໃຫ້ບັນດາທ່ານຊາບໃນເວັບໄຊທ໌ ຂອງ ຕະຫຼາດຫຼັກຊັບ ລາວ ແລະ ເວັບໄຊທ໌ ຂອງ ບໍລິສັດແລ້ວ.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບ ຮອງເອົາບົດລາຍງານການດຳເນີນທຸລະກິດ ປີ 2019 ລວມທັງລາຍງານການເງິນ ຂອງບໍລິສັດ ປີ 2019 ແລະ ແຜນການດຳເນີນທຸລະກິດ ຂອງ ບໍລິສັດປີ 2020.

ຫຼັງຈາກຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 4 ແລ້ວ, ປະທານກອງປະຊຸມໄດ້ເປີດ ໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ທ່ານປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງບົດລາຍງານ ຜົນການດຳເນີນທຸລະກິດ ຂອງ ບໍລິສັດ ປີ 2019 ລວມທັງລາຍງານການເງິນ ຂອງ ບໍລິສັດປີ 2019 ແລະ ແຜນການດຳ ເນີນທຸລະກິດ ຂອງ ບໍລິສັດ ປີ 2020 ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: **ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິ ເຫັນດີ ຮັບຮອງເອົາບົດລາຍງານຜົນການດຳເນີນ ທຸລະກິດຂອງບໍລິສັດ ປີ 2019 ລວມທັງລາຍງານການເງິນຂອງບໍລິສັດ ປີ 2019 ແລະ ແຜນການດຳເນີນທຸລະກິດຂອງບໍລິສັດ ປີ 2020, ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງ ຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:**

- **ເຫັນດີຈຳນວນ 1.454.935.212 ສຽງ ເທົ່າກັບ 99,99992 ສ່ວນຮ້ອຍ ຂອງຈຳນວນສຽງ ທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

- **ບໍ່ເຫັນດີຈຳນວນ 1.200 ສຽງ ເທົ່າກັບ 0,00008 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 5. ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2019.

ຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ທີ່ປະຊຸມເພື່ອພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2019 ອີງຕາມກົດລະບຽບ ຂອງ ບໍລິສັດ, ບໍລິສັດມີນະໂຍບາຍໃນການແບ່ງເງິນປັນຜົນໃນອັດຕາສ່ວນບໍ່ໜຸດ 50 ສ່ວນຮ້ອຍຂອງກຳໄລສຸດທິ, ພາຍຫຼັງຫັກເປັນຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງອື່ນໆ (ຖ້າມີ) ໃນແຕ່ລະປີ ຊຶ່ງການແບ່ງເງິນປັນຜົນຈະຂຶ້ນຢູ່ກັບສະພາບເສດຖະກິດ ແລະ ແຜນການລົງທຶນຕ່າງໆໃນອະນາຄົດ.

ບໍລິສັດ ມີກຳໄລສຸດທິຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2019 ເປັນເງິນຈຳນວນທັງໝົດ 207,55 ຕື້ກີບ. ສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ 6 ເດືອນທ້າຍປີ 2019 ພາຍຫຼັງການຫັກເປັນຄັງສຳຮອງຕາມລະບຽບການ ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ **28 ພຶດສະພາ 2020** ໃນອັດຕາ **100** ກີບຕໍ່ຮຸ້ນ, ລວມເປັນເງິນປັນຜົນຈ່າຍທັງໝົດ **167,93** ຕື້ກີບ ແລະ ກຳນົດຈ່າຍເງິນປັນຜົນໃນວັນທີ **26 ມິຖຸນາ 2020.**

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາອະນຸມັດການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນທ້າຍປີ 2019 ດັ່ງກ່າວ.

ຫຼັງຈາກຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 5 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມແຕ່ຢ່າງໃດ.

ຈາກນັ້ນ ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2019, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: **ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ອະນຸມັດການຈ່າຍເງິນປັນຜົນຈາກ ຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2019 ພາຍຫຼັງການຫັກເປັນຄັງສຳຮອງຕາມລະບຽບການ ໃຫ້ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ 28 ພຶດສະພາ 2020 ໃນອັດຕາ 100 ກີບຕໍ່ຮຸ້ນ, ລວມເປັນເງິນປັນຜົນຈ່າຍທັງໝົດ 167,93 ຕື້ກີບ ແລະ ກຳນົດຈ່າຍເງິນປັນຜົນໃນວັນທີ 26 ມິຖຸນາ 2020. ດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:**

- **ເຫັນດີຈຳນວນ 1.454.934.412 ສຽງ ເທົ່າກັບ 99,99986 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

- ບໍ່ເຫັນດີຈຳນວນ 2.000 ສຽງ ເທົ່າກັບ 0,00014 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6. ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ ກວດສອບບັນຊີພາຍນອກ ປີ 2020-2022.

ຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ທີ່ປະຊຸມເພື່ອພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບ ບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປີ 2020-2022 ເພື່ອເຮັດໃຫ້ການ ປະຕິບັດວຽກງານໃຫ້ຖືກຕ້ອງຕາມລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ, ບໍລິສັດສະເໜີແຕ່ງຕັ້ງຜູ້ກວດສອບບັນຊີພາຍ ນອກຄື ບໍລິສັດ PricewaterhouseCoopers (Lao) Co., Ltd. (PWC) ເປັນຜູ້ກວດສອບບັນຊີພາຍນອກ ຂອງບໍລິສັດ ສຳລັບປີ 2020-2022, ເນື່ອງຈາກວ່າ ບໍລິສັດ PWC ຊະນະການປະກວດລາຄາ ແລະ ໃນໄລຍະຜ່ານມາ ບໍລິສັດ PWC ໄດ້ມີຜົນງານການກວດສອບບັນຊີໃຫ້ບໍລິສັດແຕ່ປີ 2011-2015 ໃນຖານະທີ່ເປັນຜູ້ກວດສອບບັນຊີ ອິດສະຫຼະ ເຫັນວ່າບໍລິສັດດັ່ງກ່າວມີຄວາມລະອຽດຮອບຄອບໃນການທົບທວນ ແລະ ການກວດສອບບັນຊີຂອງ ບໍລິສັດ; ໂດຍໄດ້ມີການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ສຳລັບປີ 2020 ເປັນຈຳນວນເງິນບໍ່ເກີນ 701.215.000 ກີບ, ປີ 2021 ເປັນຈຳນວນເງິນບໍ່ເກີນ 722.500.000 ກີບ, ແລະ ປີ 2022 ເປັນຈຳນວນເງິນບໍ່ ເກີນ 744.049.000 ກີບ.

ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດ ແລະ ຄົບຖ້ວນແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງ ຂອງ ຜູ້ກວດສອບບັນຊີພາຍນອກດັ່ງກ່າວ.

ຫຼັງຈາກຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 6 ແລ້ວ, ປະທານກອງປະຊຸມໄດ້ເປີດ ໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີ ຄຳຖາມ.

ຈາກນັ້ນປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງ ຂອງ ຜູ້ກວດສອບບັນຊີພາຍນອກ ປີ 2020-2022, ວາລະນີ້ກອງ ປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ອະນຸມັດການແຕ່ງຕັ້ງຜູ້ກວດສອບ ບັນຊີພາຍນອກຄືບໍລິສັດ PricewaterhouseCoopers (Lao) Co., Ltd. (PWC) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດສຳລັບປີ 2020-2022, ໂດຍຄ່າ ຈ້າງຂອງຜູ້ກວດສອບບັນຊີພາຍນອກ ສຳລັບປີ 2020 ເປັນຈຳນວນເງິນບໍ່ເກີນ 701.215.000 ກີບ, ປີ 2021 ເປັນຈຳນວນເງິນບໍ່ເກີນ 722.500.000 ກີບ, ແລະ ປີ 2022 ເປັນຈຳນວນເງິນບໍ່ເກີນ 744.049.000 ກີບ, ດ້ວຍຄະແນນສຽງຫຼາຍກວ່າເຄິ່ງ ໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.454.919.712 ສຽງ ເທົ່າກັບ 99,9989 ສ່ວນຮ້ອຍ ຂອງຈຳນວນ ສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈຳນວນ 16.700 ສຽງ ເທົ່າກັບ 0,0011 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.**

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ວາລະທີ 7. **ພິຈາລະນາ ແລະອະນຸມັດ ເບ້ຍປະຊຸມສະພາບໍລິຫານ, ກອງເລຂາສະພາບໍລິຫານ, ແລະ ແຂກທີ່ຖືກເຊີນເຂົ້າຮ່ວມກອງປະຊຸມສະພາບໍລິຫານ**

ຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ທີ່ປະຊຸມ ໂດຍອີງຕາມສະພາບຜົນການດຳເນີນທຸລະກິດ ແລະ ທິດທາງ ມາດຕະການປະຢັດມັດທະຍັດ ຂອງບໍລິສັດ. ດັ່ງນັ້ນ, ສະເໜີອະນຸມັດເບ້ຍປະຊຸມຂອງສະພາບໍລິຫານ, ກອງເລຂາສະພາ ບໍລິຫານ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມກອງປະຊຸມສະພາບໍລິຫານ ໂດຍຫຼຸດຕ້ອຄຸນຈາກ 2 ເດືອນ ເປັນ 1.5 ເດືອນ, ຊຶ່ງມີລາຍລະອຽດດັ່ງນີ້:

1) ປະທານສະພາບໍລິຫານເທົ່າກັບ 100 ສ່ວນຮ້ອຍ ຂອງເງິນເດືອນຜູ້ອຳນວຍການໃຫຍ່ 1.5 ເດືອນ (ກ່ອນຫັກອາກອນ) / ຄັ້ງ;
2) ຮອງປະທານສະພາບໍລິຫານເທົ່າກັບ 75 ສ່ວນຮ້ອຍ ຂອງເງິນເດືອນຜູ້ອຳນວຍການໃຫຍ່ 1.5 ເດືອນ (ກ່ອນຫັກອາກອນ) / ຄັ້ງ;
3) ກຳມະການສະພາບໍລິຫານເທົ່າກັບ 50 ສ່ວນຮ້ອຍ ຂອງເງິນເດືອນຜູ້ອຳນວຍການໃຫຍ່ 1.5 ເດືອນ (ກ່ອນຫັກອາກອນ) / ຄັ້ງ;
4) ກອງເລຂາສະພາບໍລິຫານ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມກອງປະຊຸມສະພາບໍລິຫານເທົ່າກັບ 80 ສ່ວນຮ້ອຍ ຂອງເງິນເບ້ຍປະຊຸມກຳມະການສະພາບໍລິຫານ / ຄັ້ງ.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະອະນຸມັດ ເບ້ຍປະຊຸມສະພາບໍລິຫານ, ກອງເລຂາສະພາບໍລິຫານ, ແລະ ແຂກທີ່ຖືກເຊີນເຂົ້າຮ່ວມກອງປະຊຸມສະພາບໍລິຫານ. ຫຼັງຈາກຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 7 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ເວລາຕໍ່ມາ ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດເບ້ຍປະຊຸມຂອງ ສະພາບໍລິຫານ, ກອງເລຂາສະພາບໍລິຫານ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມກອງປະຊຸມສະພາບໍລິຫານ, ວາລະນີ້ກອງ ປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: **ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ອະນຸມັດເບ້ຍປະຊຸມຂອງສະພາບໍລິຫານ, ກອງເລຂາສະພາບໍລິຫານ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມກອງປະຊຸມສະພາບໍລິຫານ ໂດຍຫລຸດຕ້ອຄຸນຈາກ 2 ເດືອນ ເປັນ 1.5 ເດືອນ, ຊຶ່ງມີລາຍລະອຽດຄື:**

1) **ປະທານສະພາບໍລິຫານເທົ່າກັບ 100 ສ່ວນຮ້ອຍ ຂອງເງິນເດືອນຜູ້ອຳນວຍການໃຫຍ່ 1.5 ເດືອນ (ກ່ອນຫັກອາກອນ) / ຄັ້ງ;**
2) **ຮອງປະທານສະພາບໍລິຫານເທົ່າກັບ 75 ສ່ວນຮ້ອຍ ຂອງເງິນເດືອນຜູ້ອຳນວຍການໃຫຍ່ 1.5 ເດືອນ (ກ່ອນຫັກອາກອນ) / ຄັ້ງ;**
3) **ກຳມະການສະພາບໍລິຫານເທົ່າກັບ 50 ສ່ວນຮ້ອຍ ຂອງເງິນເດືອນຜູ້ອຳນວຍການໃຫຍ່ 1.5 ເດືອນ (ກ່ອນຫັກອາກອນ) / ຄັ້ງ;**
4) **ກອງເລຂາສະພາບໍລິຫານ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມກອງປະຊຸມສະພາບໍລິຫານເທົ່າກັບ 80 ສ່ວນຮ້ອຍ ຂອງເງິນເບ້ຍປະຊຸມກຳມະການສະພາບໍລິຫານ / ຄັ້ງ.**

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.454.930.512 ສຽງ ເທົ່າກັບ 99,9996 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈຳນວນ 5.900 ສຽງ ເທົ່າກັບ 0,0004 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 8. ພິຈາລະນາ ແລະ ຮັບຮອງເອົາສະພາບໍລິຫານຊຸດໃໝ່ ເພື່ອປ່ຽນແທນສະພາບໍລິຫານຊຸດເກົ່າທີ່ຄົບອາຍຸການ.

ຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ທີ່ປະຊຸມ ໂດຍອີງຕາມບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017 ສະບັບລົງວັນທີ 20 ເມສາ 2018 ວາລະທີ 7, ວັກທີ 3 ໄດ້ລະບຸໄວ້ວ່າ ອາຍຸການຂອງບັນດາສະພາບໍລິຫານ ຂອງບໍລິສັດທັງໝົດ ມີກຳນົດ 02 ປີ ໂດຍເລີ່ມນັບແຕ່ວັນທີກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017 ເປັນຕົ້ນໄປ. ຊຶ່ງມາຮອດປັດຈຸບັນ ເຫັນວ່າອາຍຸການຂອງບັນດາສະພາບໍລິຫານໄດ້ປະຕິບັດວຽກງານຄົບວາລະ 2 ປີແລ້ວ.

ຄະນະກຳມະການຄັດເລືອກຂອງສະພາບໍລິຫານ ໄດ້ຄົ້ນຄວ້າ ແລະ ຄັດເລືອກເອົາບຸກຄະລາກອນຈາກຫຼາຍພາກສ່ວນທີ່ມີຄຸນວຸດທິການສຶກສາສູງ, ມີຄວາມຮູ້ຄວາມສາມາດ, ມີປະສົບການໃນການດຳເນີນທຸລະກິດ ແລະ ການປະຕິບັດວຽກງານ ເພື່ອປ່ຽນແທນສະພາບໍລິຫານຊຸດເກົ່າທີ່ຄົບວາລະແລ້ວ, ໂດຍເລີ່ມຕັ້ງແຕ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ເປັນຕົ້ນໄປ (ກຳນົດ 02 ປີ). ຊີວະປະຫວັດຫຍໍ້ຂອງບັນດາສະພາບໍລິຫານແຕ່ລະທ່ານໄດ້ມີລາຍລະອຽດໃນເອກະສານ ທີ່ໄດ້ຄັດຕິດພ້ອມກັບໜັງສືແຈ້ງເຊີນ.

ຄະນະສະພາບໍລິຫານຊຸດໃໝ່ ມີລາຍຊື່ດັ່ງນີ້:

1. ທ່ານ ປອ. ຄຳມະນີ ອິນທິລາດ	ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່, ເປັນປະທານສະພາບໍລິຫານ
2. ທ່ານ ບຸນອຸ້ມ ສີວັນເພັ່ງ	ຜູ້ອຳນວຍການໃຫຍ່ ຟຟລ, ເປັນຮອງປະທານສະພາບໍລິຫານ
3. ທ່ານ ນາງ ລັດຕະນາ ປະທຸມວັນ	ຜູ້ອຳນວຍການໃຫຍ່ ຜ-ຟຟລ, ເປັນກຳມະການສະພາບໍລິຫານ
4. ທ່ານ ຄຳເພັ່ງ ທິນນະກອນ	ຮອງຫົວໜ້າກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ, ກະຊວງການເງິນ, ເປັນກຳມະການສະພາບໍລິຫານ
5. ທ່ານ ສົມພິດ ແກ້ວວິຈິດ	ຫົວໜ້າກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່, ເປັນກຳມະການສະພາບໍລິຫານ
6. ທ່ານ ໂກມິນຈັນ ເພັດອາສາ	ຮອງຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ, ເປັນກຳມະການສະພາບໍລິຫານ
7. ທ່ານ ຄຳແກ້ວ ວິສີສົມບັດ	ວ່າການຫົວໜ້າກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ, ເປັນກຳມະການອິດສະຫຼະ
8. ທ່ານ ນາງ ທະວີຈັນ ທ່ຽງເທບວົງສາ	ຮອງຫົວໜ້າກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ, ເປັນກຳມະການອິດສະຫຼະ
9. ທ່ານ ຮສ. ປອ ພູເພັດ ກ້ຽວພິລາວົງ	ຮອງຄະນະບໍດີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ, ເປັນກຳມະການອິດສະຫຼະ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ແລະ ກຳນົດຜູ້ທີ່ມີອຳນາດລົງລາຍເຊັນຜູກພັນບໍລິສັດ ດັ່ງນີ້:

1. ປະທານສະພາບໍລິຫານ ຫລື ຮອງປະທານສະພາບໍລິຫານ ຫລື ຜູ້ອຳນວຍການໃຫຍ່ ເປັນຜູ້ລົງລາຍເຊັນ ແລະ ປະທັບກາບໍລິສັດ ແຕ່ພຽງຜູ້ດຽວ; ຫລື
2. ໃຫ້ກຳມະການອື່ນສອງທ່ານ ລົງລາຍເຊັນຮ່ວມກັນ ແລະ ປະທັບກາບໍລິສັດ.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງເອົາສະພາບໍລິຫານຊຸດໃໝ່ ເພື່ອປ່ຽນແທນສະພາບໍລິຫານຊຸດເກົ່າທີ່ຄົບອາຍຸການ.

ຫຼັງຈາກຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 8 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ເວລາຕໍ່ມາ ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາສະພາບໍລິຫານຊຸດໃໝ່ ເພື່ອປ່ຽນແທນສະພາບໍລິຫານຊຸດເກົ່າທີ່ຄົບອາຍຸການ, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: **ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ຮັບຮອງເອົາສະພາບໍລິຫານຊຸດໃໝ່ ເພື່ອປ່ຽນແທນສະພາບໍລິຫານຊຸດເກົ່າທີ່ຄົບອາຍຸການ ໂດຍເລີ່ມຕັ້ງແຕ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ເປັນຕົ້ນໄປ (ກຳນົດ 02 ປີ), ມີລາຍຊື່ລະອຽດດັ່ງນີ້:**

1. ທ່ານ ປອ. ຄຳມະນີ ອິນທິລາດ — ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່, ເປັນປະທານສະພາບໍລິຫານ
2. ທ່ານ ບຸນອຸ້ມ ສີວັນເພັ່ງ — ຜູ້ອຳນວຍການໃຫຍ່ ຟຟລ, ເປັນຮອງປະທານສະພາບໍລິຫານ
3. ທ່ານ ນາງ ລັດຕະນາ ປະທຸມວັນ — ຜູ້ອຳນວຍການໃຫຍ່ ຜ-ຟຟລ, ເປັນກຳມະການສະພາບໍລິຫານ
4. ທ່ານ ຄຳເພັ່ງ ທິນນະກອນ — ຮອງຫົວໜ້າກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ, ກະຊວງການເງິນ, ເປັນກຳມະການສະພາບໍລິຫານ
5. ທ່ານ ສົມພິດ ແກ້ວວິຈິດ — ຫົວໜ້າກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່, ເປັນກຳມະການສະພາບໍລິຫານ
6. ທ່ານ ໂກມົນຈັນ ເພັດອາສາ — ຮອງຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ, ເປັນກຳມະການສະພາບໍລິຫານ
7. ທ່ານ ຄຳແກ້ວ ວິສີສົມບັດ — ວ່າການຫົວໜ້າກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ, ເປັນກຳມະການອິດສະຫຼະ
8. ທ່ານ ນາງ ທະວີຈັນ ທ່ຽງເທບວົງສາ — ຮອງຫົວໜ້າກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ, ເປັນກຳມະການອິດສະຫຼະ
9. ທ່ານ ຮສ. ປອ ພຸເພັດ ກ້ຽວພິລາວົງ — ຮອງຄະນະບໍດີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ, ເປັນກຳມະການອິດສະຫຼະ

ແລະ ກຳນົດຜູ້ທີ່ມີອຳນາດລົງລາຍເຊັນຜູກພັນບໍລິສັດ ດັ່ງນີ້:

1. **ປະທານສະພາບໍລິຫານ ຫລື ຮອງປະທານສະພາບໍລິຫານ ຫລື ຜູ້ອຳນວຍການໃຫຍ່ ເປັນຜູ້ລົງລາຍເຊັນ ແລະ ປະທັບກາບໍລິສັດ ແຕ່ພຽງຜູ້ດຽວ; ຫລື**

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

2. ໃຫ້ກຳມະການອື່ນສອງທ່ານ ລົງລາຍເຊັນຮ່ວມກັນ ແລະ ປະທັບກາບໍລິສັດ.

ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທັງໝົດ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- ເຫັນດີຈຳນວນ 1.454.853.079 ສຽງ ເທົ່າກັບ 99,9943 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 83.333 ສຽງ ເທົ່າກັບ 0,0057 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 9. ພິຈາລະນາ ແລະ ຮັບຮອງ ການດັດແກ້ກົດລະບຽບບໍລິສັດ ມາດຕາ 4 ວ່າດ້ວຍທີ່ຕັ້ງສຳນັກງານໃຫຍ່ ແລະ ສາຂາ, ມາດຕາ 9 ວ່າດ້ວຍກຳມະການ, ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ

ຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ທີ່ປະຊຸມ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຂອງບໍລິສັດ ສອດຄ່ອງກັບການແກ້ໄຂປ່ຽນແປງ ທີ່ຕັ້ງສຳນັກງານໃຫຍ່ ແລະ ສາຂາຂອງບໍລິສັດ ແລະ ການປ່ຽນຊື່ ລວມທັງຂໍ້ມູນ ຂອງສະພາບໍລິຫານ. ບໍລິສັດຈຶ່ງໄດ້ສະເໜີດັດແກ້ກົດລະບຽບບໍລິສັດມາດຕາ 4 ວ່າດ້ວຍທີ່ຕັ້ງສຳນັກງານໃຫຍ່ ແລະ ສາຂາ, ມາດຕາ 9 ວ່າດ້ວຍກຳມະການ, ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ ດັ່ງນີ້:

1) ດັດແກ້ມາດຕາ 4. ທີ່ຕັ້ງສຳນັກງານໃຫຍ່ ແລະ ສາຂາ: ໂດຍເພີ່ມເຂື່ອນໄຟຟ້າເຊເສັດ 3, ເຂື່ອນໄຟຟ້ານ້ຳຄານ 3, ແລະ ເຂື່ອນໄຟຟ້ານ້ຳຈຽນ; ເນື່ອງຈາກວ່າ ຜ-ຟຟລ ໄດ້ສຳເລັດການໂອນເຂື່ອນຈາກລັດວິສາຫະກິດໄຟຟ້າລາວ ເຊິ່ງລາຍລະອຽດ ແມ່ນໄດ້ລະບຸໄວ້ໃນເອກະສານຄັດຕິດພ້ອມກັບໜັງສືແຈ້ງເຊີນ.
2) ດັດແກ້ມາດຕາ 9 ແລະ ມາດຕາ 12: ການປ່ຽນຊື່ ແລະ ຂໍ້ມູນ ສະພາບໍລິຫານຊຸດໃໝ່ ເພື່ອປ່ຽນແທນສະພາບໍລິຫານຊຸດເກົ່າທີ່ຄົບວາລະແລ້ວ.

ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ໃນເລື່ອງດັ່ງກ່າວຂ້າງເທິງ ລວມທັງມີອຳນາດດັດແກ້ເນື້ອໃນກົດລະບຽບຂອງບໍລິສັດຕາມທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ/ຫຼື ເຈົ້າໜ້າທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວມີຄຳແນະນຳ ແລະ/ຫຼື ຄຳສັ່ງໃຫ້ດັດແກ້.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ ການດັດແກ້ກົດລະບຽບບໍລິສັດ ມາດຕາ 4 ວ່າດ້ວຍທີ່ຕັ້ງສຳນັກງານໃຫຍ່ ແລະ ສາຂາ, ມາດຕາ 9 ວ່າດ້ວຍກຳມະການ, ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ ລວມທັງການມອບອຳນາດຕາມທີ່ໄດ້ສະເໜີດັ່ງກ່າວຫຸກປະການ.

ຫຼັງຈາກຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 9 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ເວລາຕໍ່ມາ ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການດັດແກ້ກົດລະບຽບບໍລິສັດ ມາດຕາ 4 ວ່າດ້ວຍທີ່ຕັ້ງສຳນັກງານໃຫຍ່ ແລະ ສາຂາ, ມາດຕາ 9 ວ່າດ້ວຍກຳມະການ, ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ ລວມທັງການມອບອຳນາດດັ່ງກ່າວ. ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າສອງສ່ວນສາມ (2/3) ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ຖືຮຸ້ນລວມກັນຫຼາຍກວ່າແປດສິບສ່ວນຮ້ອຍ (80%) ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ຮັບຮອງການດັດແກ້ກົດລະບຽບບໍລິສັດມາດຕາ 4 ວ່າດ້ວຍທີ່ຕັ້ງສຳນັກງານໃຫຍ່ ແລະ ສາຂາ, ມາດຕາ 9 ວ່າດ້ວຍກຳມະການ, ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ ດັ່ງນີ້:

1) ດັດແກ້ມາດຕາ 4. ທີ່ຕັ້ງສຳນັກງານໃຫຍ່ ແລະ ສາຂາ: ໂດຍເພີ່ມເຂື່ອນໄຟຟ້າເຊເສັດ 3, ເຂື່ອນໄຟຟ້ານ້ຳຄານ 3, ແລະ ເຂື່ອນໄຟຟ້ານ້ຳຈຽນ; ເນື່ອງຈາກວ່າ ຜ-ຟຟລ ໄດ້ສຳເລັດການໂອນເຂື່ອນຈາກລັດວິສາຫະກິດໄຟຟ້າລາວ.

2) ດັດແກ້ມາດຕາ 9 ແລະ ມາດຕາ 12: ການປ່ຽນຊື່ ແລະ ຂໍ້ມູນ ສະພາບໍລິຫານ ຊຸດໃໝ່ ເພື່ອປ່ຽນແທນສະພາບໍລິຫານຊຸດເກົ່າທີ່ຄົບວາລະແລ້ວ.

ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ໃນເລື່ອງດັ່ງກ່າວຂ້າງເທິງ ລວມທັງມີອຳນາດດັດແກ້ເນື້ອໃນກົດລະບຽບຂອງບໍລິສັດຕາມທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ/ຫຼື ເຈົ້າໜ້າທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວມີຄຳແນະນຳ ແລະ/ຫຼື ຄຳສັ່ງໃຫ້ດັດແກ້.

ກອງປະຊຸມໄດ້ມີມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າສອງສ່ວນສາມ (2/3) ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນຫຼາຍກວ່າແປດສິບສ່ວນຮ້ອຍ (80%) ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດດັ່ງນີ້:

(ກ) ຈຳນວນຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ:

1. ເຫັນດີຈຳນວນ 189 ຄົນ ເທົ່າກັບ 100 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.
2. ບໍ່ເຫັນດີຈຳນວນ 0 ຄົນ ເທົ່າກັບ 0 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ

(ຂ) ຈຳນວນສຽງ (ຮຸ້ນ) ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ:

1. ເຫັນດີ 1.454.936.412 ສຽງ (ຮຸ້ນ) ເທົ່າກັບ 86,6393 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.
2. ບໍ່ເຫັນດີ 0 ສຽງ (ຮຸ້ນ) ເທົ່າກັບ 0 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.

ຖືວ່າໄດ້ພິຈາລະນາຄົບວາລະກອງປະຊຸມແລ້ວ, ແລະ ປະທານໄດ້ສະເໜີທີ່ປະຊຸມເພື່ອປະກອບຄຳຄິດຄຳເຫັນຕື່ມ ແລະ ຊັກຖາມຂໍ້ຂ້ອງໃຈອື່ນໆ ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ໃນຕອນທ້າຍຂອງການປະຊຸມ ປະທານກອງປະຊຸມ ໄດ້ແຈ້ງໃຫ້ທີ່ປະຊຸມຊາບກ່ຽວກັບຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມມີຈຳນວນຜູ້ຖືຮຸ້ນເຂົ້າຮ່ວມປະຊຸມດ້ວຍຕົນເອງມີຈຳນວນ 44 ທ່ານ ແລະ ມີຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຜູ້ຖືຮຸ້ນຈຳນວນ 145 ທ່ານ ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 189 ຄົນ ຖືຮຸ້ນລວມກັນ 1.454.936.412 ຮຸ້ນ ເທົ່າກັບ 86,64 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ແລະ ຕໍ່ມາປະທານກອງປະຊຸມ ໄດ້ກ່າວຄຳຂອບໃຈບັນດາທ່ານຜູ້ຖືຮຸ້ນທຸກທ່ານ ທີ່ເຂົ້າຮ່ວມກອງປະຊຸມໃນມື້ນີ້ ແລະ ຂໍອວຍພອນໄຊແດ່ ບັນດາຄະນະຜູ້ບໍລິຫານບໍລິສັດ ຈົ່ງມີສຸຂະພາບເຂັ້ມແຂງ ປະສົບຜົນສຳເລັດໃນໜ້າທີ່ວຽກງານ, ຂໍອວຍພອນໄຊແດ່ ທ່ານ ຜູ້ຖືຮຸ້ນທຸກທ່ານ ແລະ ບັນດາແຂກທີ່ມີກຽດທຸກທ່ານ ຈົ່ງມີສຸຂະພາບເຂັ້ມແຂງ ປະສົບຜົນສຳເລັດໃນໜ້າທີ່ວຽກງານທຸກປະການ.

ກອງປະຊຸມໄດ້ພິຈາລະນາຄົບຖ້ວນຕາມວາລະກອງປະຊຸມແລ້ວ, ບໍ່ມີເລື່ອງໃດທີ່ຈະພິຈາລະນາຕື່ມ, ປະທານກອງປະຊຸມ ໄດ້ກ່າວປິດກອງປະຊຸມເວລາ 16:00 ໂມງ.

ປະທານກອງປະຊຸມ

ປອ. ຄຳມະນີ ອິນທິລາດ

ຮັບຮອງຖືກຕ້ອງ

ລັດຕະນາ ປະທຸມວັນ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ຊີວະປະຫວັດຫຍໍ້ຂອງຮອງປະທານສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ພ້ອມດ້ວຍຄະນະ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ຊີວະປະຫວັດຫຍໍ້ຂອງ ທ່ານ ຈັນທະບຸນ ສຸກອາລຸນ

ຊື່ ແລະ ນາມສະກຸນ:	ທ່ານ ຈັນທະບຸນ ສຸກອາລຸນ
ວັນ/ເດືອນ/ປີ/ເກີດ:	03/05/1973
ອາຍຸ:	47 ປີ
ສັນຊາດ:	ລາວ
ທີ່ຢູ່ປັດຈຸບັນ:	ບ້ານ ດອນກອຍ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ
ລະດັບວິຊາສະເພາະສູງສຸດ:	- ປະລິນຍາໂທ ສາຂາ ບໍລິຫານທຸລະກິດ, emphasis in Finance, Avila University, Kansas City, ປະເທດສະຫະລັດອາເມລິກາ. - ປະລິນຍາຕີສາຂາ ວິສະວະກຳໄຟຟ້າ ຢູ່ມະຫາວິທະຍາໄລແຫ່ງຊາດລາວ.

<u>ການຝຶກອົບຮົມ:</u>

2008	Master Key Legal and Contractual issue in Project Financing. Project Finance Law and Infrastructure School.
2010	Arbitration for Judges. International Law Institute, Washington DC. USA

<u>ປະສົບການເຮັດວຽກ:</u>

1997-2000	- ຫົວໜ້າພະແນກການສ້ອມແປງ, ບໍລິສັດ ຫ້ວຍເຫາະພາວເວີ້ ຈຳກັດ, ແຂວງອັດຕະປື
2000-2001	- ພະນັກງານຢູ່ກົມໄຟຟ້າ, ກະຊວງອຸດສາຫະກຳ ແລະ ຫັດຖະກຳ
2004	- ພະນັກງານສັງກັດຢູ່ກົມສິ່ງເສີມ ແລະ ພັດທະນາພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່
2007	- ຮອງຫົວໜ້າພະແນກເຈລະຈາ ແລະ ຄຸ້ມຄອງສັນຍາ, ກົມສິ່ງເສີມ ແລະ ພັດທະນາພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່
2008	ຫົວໜ້າພະແນກເຈລະຈາ ແລະ ສັນຍາຄຸ້ມຄອງ, ກົມສິ່ງເສີມ ແລະ ພັດທະນາພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່.
2012	ຮອງຫົວໜ້າກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່.
2017	ຮັກສາການຫົວໜ້າກົມແຜນການ ແລະ ການຮ່ວມມື, ກະຊວງພະລັງງານ ແລະ ບໍ່ແຮ່
2019-2020	ຫົວໜ້າກົມແຜນການ ແລະ ການຮ່ວມມື, ກະຊວງພະລັງງານ ແລະ ບໍ່ແຮ່
2020-ປັດຈຸບັນ	ຜູ້ວ່າການຜູ້ອຳນວຍການໃຫຍ່ລັດວິສາຫະກິດໄຟຟ້າລາວ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ຊີວະປະຫວັດຫຍໍ້ຂອງ ທ່ານ ດວງສີ ພາຣະຍົກ

ຊື່ ແລະ ນາມສະກຸນ:	ທ່ານ ດວງສີ ພາຣະຍົກ
ວັນ/ເດືອນ/ປີເກີດ:	08/03/1962
ອາຍຸ:	58 ປີ
ສັນຊາດ:	ລາວ
ທີ່ຢູ່ປັດຈຸບັນ:	ບ້ານ ສາລະຄຳເໜືອ, ເມືອງ ຫາດຊາຍຟອງ, ນະຄອນຫຼວງວຽງຈັນ
ລະດັບວິຊາສະເພາະສູງສຸດ:	ປະລິນຍາໂທ, ພາກວິຊາລະບົບຕາໜ່າງໄຟຟ້າ, ອະດີດສະຫະພາບໂຊຫວຽດ

ການເຝິກອົບຮົມ:

2001	ພື້ນຖານດ້ານບັນຊີ, ແຂວງວຽງຈັນ
2002	ລະບົບພະລັງງານໄຟຟ້າ, ປະເທດນິວຊີແລນ
2014	ທິດສະດີການປົກຄອງລະບົບເລັ່ງລັດ 05 ເດືອນ, ສະຖາບັນການເມືອງການປົກຄອງແຫ່ງຊາດ

ປະສົບການໃນການເຮັດວຽກ:

1985-1988	ຮອງຫົວໜ້າໂຄງການສຳຫຼວດໄຟຟ້າ, ກອງສຳຫຼວດໄຟຟ້ານ້ຳຕົກ, ກະຊວງອຸດສາຫະກຳ ຫັດຖະກຳ ແລະ ປ່າໄມ້ໂຄງການສຳຫຼວດໄຟຟ້າຮັບໃຊ້ແຂວງໄຊຍະບູລີ, ຊຽງຂວາງ,ຈຳປາສັກ, ສາລະວັນ, ອັດຕະປື ແລະ ເຊກອງ.
1989-1991	ຮອງຫົວໜ້າກອງກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ, ຢູ່ກອງກໍ່ສ້າງ ແລະ ຕິດຕັ້ງໄຟຟ້າປະຈຳແຂວງຄຳ ມ່ວນ, ກະຊວງອຸດສາຫະກຳ ແລະ ຫັດຖະກຳ.
1992-1994	ຮອງຫົວໜ້າກອງກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ, ຢູ່ກອງກໍ່ສ້າງ ແລະ ຕິດຕັ້ງໄຟຟ້າປະຈຳແຂວງສາລະ ວັນ, ກະຊວງອຸດສາຫະກຳ ແລະ ຫັດຖະກຳ.
1995-2006	ຫົວໜ້າສາຂາແຂວງບໍລິຄຳໄຊ, ລັດວິສາຫະກິດໄຟຟ້າແຂວງບໍລິຄຳໄຊ.
2006-2011	ຫົວໜ້າຝ່າຍຈຳໜ່າຍ, ລັດວິສາຫະກິດໄຟຟ້າລາວ.
2012-ປັດຈຸບັນ	ຮອງຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ.

❖ ປັດຈຸບັນເປັນສະພາບໍລິຫານຢູ່ 01 ບໍລິສັດ: 1) ບໍລິສັດ ໄຟຟ້າເຊຊະໝານ 3 ຈຳກັດ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ຊີວະປະຫວັດຫຍໍ້ ຂອງ ທ່ານ ວົງສະກຸນ ຍົ່ງຍົງ

ຊື່ ແລະ ນາມສະກຸນ:	ທ່ານ ວົງສະກຸນ ຍົ່ງຍົງ
ວັນ/ເດືອນ/ປີເກີດ:	05/10/1964
ອາຍຸ:	56 ປີ
ສັນຊາດ:	ລາວ
ທີ່ຢູ່ປັດຈຸບັນ:	ບ້ານ ນາເລົ່າ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ
ລະດັບວິຊາສະເພາະສູງສຸດ:	- ປະລິນຍາໂທ ສາຂາວິຊາ ກົງຫັນພະລັງນ້ຳ ແລະ ລະບົບບັງຄັບ, ມະຫາວິທະຍາໄລກໍ່ສ້າງເຄື່ອງຈັກ, ອະດີດສະຫະພາບໂຊຫວຽດ

ການເຝິກອົບຮົມ:

1991-1993	ວິຊາສ້ອມແປງ ແລະ ບຳລຸງຮັກສາກົງຫັນພະລັງນ້ຳ ທີ່ໂຮງຮຽນມະຫາວິທະຍາໄລກໍ່ສ້າງເຄື່ອງຈັກ, ອະດີດສະຫະພາບໂຊຫວຽດ
1995	ວິຊາສ້ອມແປງປັ໊ມນ້ຳ, ປ໊ຳລົມ, ວາວປະຕູນ້ຳ ແລະ ທໍ່, ວິຊາປັບຄວາມທ່ຽງຂອງເຟົ້າເຄື່ອງໄຟຟ້າ ແລະ ເຄື່ອງຈັກປັ່ນໄຟ, ວິຊາລູກຫວ່ານ ແລະ ລະບົບລໍ່ລື່ນ (ເຄື່ອງຈັກ) ທີ່ມະຫາວິທະຍາໄລ IKATAM, ປະເທດມາເລເຊຍ
2001	ການຈັດການເສດຖະກິດຕະຫຼາດ ຂອງສະຖາບັນ Price Water HouseCoppers
2001	ການຈັດການບັນຊີ ຂອງສະຖາບັນ Managing Hydropower
2007	Small Scale and Clean Energy Power (Solar and Wine Power) ທີ່ TEPCO JAPAN

ປະສົບການໃນການເຮັດວຽກ:

1993-1999	ຫົວໜ້າພະແນກກົນຈັກ, ພະແນກກໍ່ສ້າງ ແລະ ຫົວໜ້າພະແນກຈັດຕັ້ງບໍລິຫານ ເຂື່ອນໄຟຟ້າແຊລະບໍ, ລັດວິສາຫະກິດໄຟຟ້າລາວ
1999-2000	ຫົວໜ້າເຂື່ອນໄຟຟ້າແຊລະບໍ
10/03-18/06/2010	ຮອງຫົວໜ້າເຂື່ອນໄຟຟ້າເຊເສັດ 1-2
2010-2011	ຫົວໜ້າໂຄງການກໍ່ສ້າງເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່
2013-2017	ຮອງຫົວໜ້າຝ່າຍກໍ່ສ້າງເຂື່ອນ, ທັງເປັນຫົວໜ້າໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳງື່ມ 3.
2011-ປັດຈຸບັນ	ຮອງຫົວໜ້າຝ່າຍກໍ່ສ້າງເຂື່ອນ ແລະ ຄຸ້ມຄອງໂຄງການຮ່ວມທຶນ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ຊີວະປະຫວັດຫຍໍ້ ຂອງ ທ່ານ ນາງ ສຸກສັນ ພົງພິລາ

ຊື່ ແລະ ນາມສະກຸນ:		ທ່ານ ນາງ ສຸກສັນ ພົງພິລາ
ວັນ/ເດືອນ/ປີເກີດ:		04/12/1965
ອາຍຸ:		55 ປີ
ສັນຊາດ:		ລາວ
ທີ່ຢູ່ປັດຈຸບັນ:		ບ້ານ ທົ່ງຕູມ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ
ລະດັບວິຊາສະເພາະສູງສຸດ:	-	International Master of Business Administration at National Academy of Politics and Public Administration (NAPPA)

ການຝຶກອົບຮົມ:

1991	ການໂທລະຄົມມະນາຄົມ ຈັດໂດຍ TATA Consuting Engineers, ນະຄອນຫຼວງວຽງຈັນ
1992	ອຸປະກອນໄຟຟ້າ ແລະ ອຸດສາຫະກຳທີ່ Indian Institute for Foremen Training, India
1996	ພື້ນຖານການບໍລິຫານ ຈັດໂດຍ Tenaga Nasional Berhal, IKATAN, Malaysia
1998	ພາສາອັງກິດສຳລັບຊາວໜຸ່ມລາວທີ່ Regional Language Centre, Language Teaching Institute Singapore, Southeast Asian Ministers of Education Organization, ປະເທດສິງກະໂປ.
2003	ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສຳລັບໂຄງການພັດທະນາໄຟຟ້າ, ບໍ່ແຮ່ ແລະ ທ່າງຫຼວງໃນ ສປປ ລາວ ຈັດໂດຍອົງການວິທະຍາສາດເຕັກໂນໂລຊີ ແລະ ສິ່ງແວດລ້ອມ ແລະ ໄດ້ຮັບການສະໜັບສະໜູນ ຈາກອົງການຊິດາ, ປະເທດສະວີເດັນ.
2006	ການພັດທະນາພະລັງງານໄຟຟ້າຂະໜາດນ້ອຍທີ່ Indian Institute of Technology, Alternate Hydro Energy Centre, Roorkee, ປະເທດອິນເດຍ.
2011	BCP-2 ການເງິນທຸລະກິດກັບຕະຫຼາດທຶນສຳລັບຜູ້ບໍລິຫານມືອາຊີບ (Business Finance in Capital Market for Professional Executive ທີ່ວິທະຍາໄລບຸດວິເສດ).
2011	ຂະບວນການປະເມີນກະທົບຕໍ່ສັງຄົມ ທີ່ International Centre for Hydropower, ປະເທດນໍເວ
2013	HAPUA Working Group No. 5 – Human Resource workshop on Leadership Development Model, Leadership Assessment and Talent Development, ທີ່ National Transmission Corporation, ປະເທດຟີລິບປິນ.
2015	Organizational and HR Flexibility Workshop, ຈັດໂດຍ HAPUA Working Group No. 5 on Human Resource ທີ່ປະເທດມາເລເຊຍ.
2017	ຄວາມເປັນຜູ້ນຳອາຊຽນຂອງລັດຖະບານ (ASEAN Government Leadership Program), ທີ່ GE Crotonville, ປະເທດສະຫະລັດອາເມລິກາ.

ປະສົບການໃນການເຮັດວຽກ:

1987-1994	ພະນັກງານສັງກັດລັດວິສາຫະກິດໄຟຟ້າລາວ ຮັບຜິດຊອບວຽກງານສື່ສານລະບົບສິ່ງ-ສະຖານີ.
1994-1997	ພະນັກງານສັງກັດລັດວິສາຫະກິດໄຟຟ້າລາວ ຮັບຜິດຊອບວຽກງານຫ້ອງການຜູ້ອຳນວຍການໃຫຍ່.
1997-1999	ຫົວໜ້າຫ້ອງການຝ່າຍບໍລິການ, ລັດວິສາຫະກິດໄຟຟ້າລາວ.
1999-2002	ຜູ້ຊ່ວຍຫົວໜ້າຫ້ອງການຜູ້ອຳນວຍການໃຫຍ່, ລັດວິສາຫະກິດໄຟຟ້າລາວ
2002-2006	ພະນັກງານລັດວິສາຫະກິດໄຟຟ້າລາວ ຮັບຜິດຊອບວຽກງານສິ່ງແວດລ້ອມ-ສັງຄົມ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

2006-2011 ພະນັກງານສັງກັດລັດວິສາຫະກິດໄຟຟ້າລາວ ຮັບຜິດຊອບວຽກງານຫົວໜ້າຫ້ອງການບໍລິຫານ

2011-2016 ຜູ້ອຳນວຍການຝ່າຍບໍລິຫານງານສະໜັບສະໜຸນອົງກອນ

2016-ປັດຈຸບັນ ຜູ້ຊ່ວຍຜູ້ອຳນວຍການໃຫຍ່/ຜູ້ອຳນວຍການຝ່າຍແຜນການ

❖ ປັດຈຸບັນເປັນສະພາບໍລິຫານຢູ່ 03 ບໍລິສັດ: 1) ບໍລິສັດ ນ້ຳບິພາວເວີ ຈຳກັດ 2) ບໍລິສັດ ໄຟຟ້ານ້ຳງຽບ 2 ຈຳກັດ
3) ບໍລິສັດ ໄຟຟ້ານ້ຳລີກ 1-2 ຈຳກັດ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ຊີວະປະຫວັດຫຍໍ້ຂອງ ທ່ານ ວັນແສງ ວັນນະວົງ

ຊື່ ແລະ ນາມສະກຸນ:	ທ່ານ ວັນແສງ ວັນນະວົງ
ວັນ/ເດືອນ/ປີ/ເກີດ:	30/03/1974
ອາຍຸ:	46 ປີ
ສັນຊາດ:	ລາວ
ທີ່ຢູ່ປັດຈຸບັນ:	ບ້ານ ທົ່ງປົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ
ລະດັບວິຊາສະເພາະສູງສຸດ:	- ປະລິນຍາໂທ ສາຂາການບັນຊີ ຢູ່ມະຫາວິທະຍາໄລແຫ່ງຊາດ

<u>ການເຝິກອົບຮົມ:</u>

1999	ປະກາດສະນິຍະບັດເຕັກນິກ, ໂຮງຮຽນການຊ່າງປາກປ່າສັກ
2002	ທີ່ປຶກສາບັນຊີ LCPA, ອົງການຈັດຕັ້ງວິຊາຊີບການບັນຊີລາວ
2008	ປະລິນຍາຕີການບໍລິຫານການເງິນ-ການທະນາຄານ, ວິທະຍາໄລລັດຕະນະ ແລະ ບໍລິຫານທຸລະກິດ
2010	ທິດສະດີການເມືອງ ແລະ ການປົກຄອງ ໄລຍະສັ້ນ 45 ວັນ
2013	ປະລິນຍາໂທສາຂາບັນຊີ, ມະຫາວິທະຍາໄລແຫ່ງຊາດ
2014	ກຳມະການສະພາບໍລິຫານບໍລິສັດ (Director Certification Program), ສະຖາບັນ IOD ປະເທດໄທ
2019	ສະຖາບັນວິທະຍາກອນຕະຫຼາດທຶນ (CMA-GMS) Capital Market Academy

<u>ປະສົບການເຮັດວຽກ:</u>

1993-1997	ພະນັກງານຊ່ວຍວຽກອາຈານສອນທີ່ໂຮງຮຽນວິຊາຊີບ N.E.C
1997-2010	ຮອງຫົວໜ້າຫ້ອງການບັນຊີ, ລັດວິສາຫະກິດໄຟຟ້າລາວ
2010-2016	ວ່າການຜູ້ອຳນວຍການຝ່າຍການເງິນ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
2016-ປັດຈຸບັນ	ຜູ້ອຳນວຍການຝ່າຍການເງິນ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

❖ ປັດຈຸບັນເປັນສະພາບໍລິຫານຢູ່ 04 ບໍລິສັດ: 1) ບໍລິສັດ ໄຟຟ້າຫ້ວຍເຫາະຈຳກັດ 2) ບໍລິສັດ ໄຟຟ້ານ້ຳດີກ 1 ຈຳກັດ
3) ບໍລິສັດ ຫ້ວຍລຳພັນຕອນລຸ່ມຈຳກັດ 4) ບໍລິສັດ ໄຟຟ້ານ້ຳບີ ຈຳກັດ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ໃບມອບສັນທະ

PROXY

ຂຽນທີ່ ..... Written at

ວັນທີ ..... ເດືອນ ..... ປີ .....

Date Month Year

(1) ຂ້າພະເຈົ້າ ..... ສັນຊາດ ..... ວັນທີ, ເດືອນ ແລະ ປີເກີດ .....

I/We Nationality date, month and year of birth

ບັດປະຈຳຕົວເລກທີ ..... ຢູ່ເຮືອນເລກທີ ..... ບ້ານ ..... ຖະໜົນ .....

ID card number Reside at Village Road

ເມືອງ ..... ແຂວງ .....

District Province

(2) ເປັນຜູ້ຖືຮຸ້ນ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.

Being a shareholder of EDL-Generation Public Company.

ໂດຍຖືຮຸ້ນສາມັນຈຳນວນລວມທັງໝົດ ..... ຮຸ້ນຊຶ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງໄດ້.

holding the ordinary shares in the total amount of shares, which are equivalent to the same number of votes.

(3) ຂໍມອບໝາຍໃຫ້

Hereby appoint

(1) ທ່ານ/ທ່ານນາງ ..... ອາຍຸ ..... ປີ,ຢູ່ເຮືອນເລກທີ .....

Mr./Ms. age years, reside at

ຖະໜົນ ..... ບ້ານ ..... ເມືອງ .....

Road Village District

ແຂວງ ..... ລະຫັດໄປສະນີ ..... ຫຼື

Province Postal Code or

(2) ທ່ານ ຄຳແກ້ວ ວິສີສົມບັດ ..... ອາຍຸ 45 ປີ, ຢູ່ເຮືອນເລກທີ 015

Mr. Khamkeo VISYSOMBATH age 45 years, resides at 015

ຖະໜົນ ..... ບ້ານ .....ໂພນໄຊ..... ເມືອງ ..... ໄຊເສດຖາ .....

Road Village Phonxay District Xaysetha

ແຂວງ ..... ນະຄອນຫຼວງວຽງຈັນ ..... ລະຫັດໄປສະນີ ..... 2392 ..... ຫຼື

Province Postal Code 2392 or

(3) ທ່ານ ນາງ ທະວີຈັນ ທ່ຽງເທບວົງສາ ..... ອາຍຸ 48 ປີ,ຢູ່ເຮືອນເລກທີ 23/8

Mrs. Thavichanh THIENGTHEPVONGSA age 48 years, resides at 23/8

ຖະໜົນ ..... ບ້ານ.....ຫາຍໂสก ..... ເມືອງ ..... ຈັນທະບູລີ .....

Road Village Haiysok District Chanthabouly

ແຂວງ.....ນະຄອນຫຼວງວຽງຈັນ ..... ລະຫັດໄປສະນີ ..... 2392 ..... ຫຼື

Province Postal Code 2392 or

(4) ທ່ານ ຮສ.ປອ. ພູເພັດ ກ້ຽວພິລາວົງ ..... ອາຍຸ 46 ປີ, ຢູ່ເຮືອນເລກທີ.....488.....

Assoc. Prof. Phouphet KYOPHILAVONG age 46 years, resides at 488

ຖະໜົນ ..... ບ້ານ ..... ສວນມອນ ..... ເມືອງ ..... ສີສັດຕະນາກ .....

Road Village Suanmone District Sisattanak

ແຂວງ ..... ນະຄອນຫຼວງວຽງຈັນ ..... ລະຫັດໄປສະນີ .....

Vientiane Capital Postal Code 2392

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ຄົນໃດຄົນໜຶ່ງພຽງຄົນດຽວ ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງແທນຂ້າພະເຈົ້າ ໃນກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2020 ໃນວັນທີ 24 ກໍລະກົດ 2020 ເວລາ 15:00 ໂມງ.

Any one of them to be my/our proxy to attend and vote on my/our behalf at the Extraordinary General Meeting for the Year 1/2020 to be on 24 July 2020 at 3:00 pm.

ສະຖານທີ່ຫ້ອງປະຊຸມ ຊັ້ນທີ 1 ອາຄານສຳນັກງານ ລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງ ວຽງຈັນ ຫຼື ທີ່ໄດ້ເລື່ອນໄປໃນວັນ, ເວລາ ແລະ ສະຖານທີ່ອື່ນດ້ວຍ.

At meeting room, 1st floor, EDL Headquarter building, Lao-Thai Friendship Road, Thongkang Village, Sisattanak District, Vientiane Capital or any adjournment at any date, time and place thereof.

(4) ຂ້າພະເຈົ້າຂໍມອບໝາຍໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມຄັ້ງນີ້ດັ່ງນີ້:

I/We hereby authorize the proxy to vote on my/our behalf at this meeting as follows:

☐ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະລົງມະຕິແທນຂ້າພະເຈົ້າໄດ້ທຸກປະການຕາມທີ່ເຫັນສົມຄວນ;

To grant my/our proxy to consider and vote on my/our behalf as he/she may deem appropriate in all respects;

☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າແລະມີສິດພິຈາລະນາແລະລົງມະຕິແທນຂ້າພະເຈົ້າໃນບາງວາລະ;

To grant my/our proxy to vote as per my/our intention and consider and vote on my/our behalf in some agendas as he/she may deem appropriate in all respects;

☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ.

To grant my/our proxy to vote as per my/our intention

ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019.

Agenda No. 1 **To consider and adopt the Minutes of Annual General Shareholders' Meeting for the year 2019.**

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 2: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ອຳນວຍການໃຫຍ່ຜູ້ໃໝ່ ພ້ອມດ້ວຍຄະນະ ເພື່ອປ່ຽນແທນຜູ້ອຳນວຍ ການໃຫຍ່ຜູ້ເກົ່າ ພ້ອມດ້ວຍຄະນະທີ່ເຂົ້າຮັບກະສຽນບຳເນັດ.

Agenda No.2 **To consider and adopt the appointment of new Managing Director (CEO) and Deputy Managing Directors in replacement of the former retired Managing Director (CEO) and Deputy Managing Directors.**

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 3: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຮອງປະທານສະພາບໍລິຫານ ແລະ ກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນ ແທນຜູ້ເກົ່າທີ່ເຂົ້າກະສຽນບຳເນັດ, ການກຳນົດຜູ້ມີອຳນາດໃນການລົງລາຍເຊັ່ນຜູກພັນບໍລິສັດ ແລະ ອາຍຸການຂອງ ບັນດາກຳມະການສະພາບໍລິຫານບໍລິສັດ.

Agenda No. 3 **To consider and adopt the appointment new Vice Chairman of Board of Directors and Director of Board of Directors in replacement of former retired Directors, the determination of the authorised persons who can sign to bind the Company and the term of office of the Board of Directors.**

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 4: ພິຈາລະນາ ແລະ ຮັບຮອງການດັດແກ້ກົດລະບຽບຂອງບໍລິສັດ ມາດຕາ 9 ວ່າດ້ວຍກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ.

Agenda No. 4 **To consider and adopt the amendments to the Articles of Association of the Company in Article 9: Directors and Article 12: Board of Directors.**

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

(5) ການລົງຄະແນນສຽງຂອງຜູ້ຕາງໜ້າ ໃນວາລະປະຊຸມໃດທີ່ບໍ່ເປັນໄປຕາມທີ່ລະບຸໄວ້ໃນໃບມອບສັນທະສະບັບນີ້ ໃຫ້ຖືວ່າການລົງຄະແນນສຽງນັ້ນບໍ່ຖືກຕ້ອງ ແລະບໍ່ແມ່ນການລົງຄະແນນສຽງຂອງຂ້າພະເຈົ້າ ໃນຖານະຜູ້ຖືຮຸ້ນ.

Voting of the proxy in any agenda that is not as specified in this Proxy shall be considered as invalid and shall not be my/our voting as a shareholder.

(6) ໃນກໍລະນີທີ່ຂ້າພະເຈົ້າ ບໍ່ໄດ້ລະບຸຄວາມຕ້ອງການໃນການລົງຄະແນນສຽງ ໃນວາລະປະຊຸມໃດໄວ້ ຫຼື ລະບຸໄວ້ບໍ່ຈະແຈ້ງໃຫ້ຖືວ່າເຫັນດີ.

In case I/we have not specified my/our voting intention in any agenda or not clearly specified, it shall be deemed approved.

ການກະທຳໃດ ທີ່ຜູ້ຕາງໜ້າໄດ້ກະທຳໄປໃນກອງປະຊຸມ, ເວັ້ນແຕ່ກໍລະນີທີ່ຜູ້ຕາງໜ້າບໍ່ລົງຄະແນນສຽງ ຕາມທີ່ຂ້າພະເຈົ້າລະບຸໃນໃບມອບສັນທະສະບັບນີ້, ໃຫ້ຖືວ່າຂ້າພະເຈົ້າໄດ້ກະທຳເອງທຸກຢ່າງ.

Any business carried out by the proxy at the said meeting, except in case that the proxy does not vote according to my/our intention(s) specified in the Proxy, shall be deemed as having been carried out by myself/ourselves in all respects.

ລົງລາຍເຊັ້ນ/Signed ຜູ້ຖືຮຸ້ນທີ່ມອບໝາຍ/Grantor

(.....)

ລົງລາຍເຊັ້ນ/Signed ຜູ້ຕາງໜ້າ/Proxy

(.....)

ໝາຍເຫດ

1. ຜູ້ຖືຮຸ້ນທີ່ມອບໝາຍຈະຕ້ອງມອບໝາຍໃຫ້ຜູ້ຕາງໜ້າພຽງຜູ້ດຽວເປັນຜູ້ເຂົ້າຮ່ວມປະຊຸມແລະລົງຄະແນນສຽງ, ແລະບໍ່ສາມາດແບ່ງແຍກຈຳ ນວນຮຸ້ນ ໃຫ້ຜູ້ຕາງໜ້າຫຼາຍຄົນເພື່ອແຍກການລົງຄະແນນສຽງໄດ້.

The shareholder appointing the proxy must authorize only one proxy to attend and vote at the meeting and may not split the number of shares to several proxies for splitting votes.

2. ກົດໝາຍວ່າດ້ວຍທະບຽນສານ (ສະບັບປັບປຸງ) ເລກທີ 11/ສພຊ, ລົງວັນທີ 26 ພະຈິກ 2009, ເພື່ອເປັນການຮັບປະກັນຄວາມຜູກພັນຂອງຜູ້ມອບໝາຍແລະຜູ້ຕາງໜ້າທາງດ້ານກົດໝາຍ, ດັ່ງນັ້ນໃບມອບສັນທະສະບັບນີ້ຈະຕ້ອງໄດ້ນຳໄປຈົດທະບຽນສານ, ໃນນີ້ບໍລິສັດຈະບໍ່ຮັບຜິດຊອບໃດໆໃນກໍລະນີທີ່ໃບມອບສັນທະສະບັບນີ້ທີ່ຍື່ນຕໍ່ບໍລິສັດບໍ່ໄດ້ຈົດທະບຽນສານ.

Pursuant to the Law on Notary (Amended) No. 11/NA, dated 26 November 2009, in order for the appointment by the shareholder to the proxy to have legal effect, this Proxy must be registered with the court. In this regard, the Company will not take any responsibility in the case where the Proxy submitted to the Company has not been registered with the court.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ເອກະສານ ແລະ ຫຼັກຖານ ທີ່ຜູ້ເຂົ້າຮ່ວມກອງປະຊຸມຕ້ອງໃຊ້ເພື່ອການສະເໜີໂຕ ໃນການເຂົ້າຮ່ວມກອງປະຊຸມ ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ

ເພື່ອຄວາມສະດວກໃນການລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2020 ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ຈະມາເຂົ້າຮ່ວມກອງປະຊຸມ ກະລຸນານຳໜັງສືເຊີນປະຊຸມ, ໃບແຈ້ງສິດ ແລະ ໃບມອບສັນທະມາພ້ອມ.

<u>ບໍລິສັດ ຂໍສະຫງວນສິດ ໃນການອະນຸຍາດໃຫ້ສະເພາະຜູ້ທີ່ມີເອກະສານຖືກຕ້ອງ ແລະ ຄົບຖ້ວນເທົ່ານັ້ນ ຈຶ່ງສາມາດເຂົ້າຮ່ວມກອງປະຊຸມໄດ້.</u>

1. ເອກະສານ ແລະ ຫຼັກຖານ (ທີ່ຍັງບໍ່ໝົດອາຍຸ) ທີ່ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ຈະຕ້ອງໃຊ້ໃນການສະເໜີໂຕ ໃນການເຂົ້າຮ່ວມກອງປະຊຸມ

1.1 <u>ຜູ້ຖືຮຸ້ນທີ່ເປັນບຸກຄົນ</u>

1.1.1 ກໍລະນີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມດ້ວຍຕົນເອງ ໃຫ້ສະແດງເອກະສານທີ່ທາງພາກລັດອອກໃຫ້ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

1.1.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

(1) ໃບມອບສັນທະ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ຊຶ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ.

(2) ສຳເນົາເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຖືຮຸ້ນທີ່ມອບໝາຍ ຕາມຂໍ້ 1.1.1 ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຜູ້ຖືຮຸ້ນທີ່ມອບໝາຍ.

(3) ເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

1.2 <u>ຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນ</u>

1.2.1 ກໍລະນີຕົວແທນຂອງຜູ້ຖືຮຸ້ນ (ຜູ້ອຳນວຍການ) ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

(1) ເອກະສານທີ່ທາງພາກລັດອອກໃຫ້ຂອງຕົວແທນ ຂອງ ນິຕິບຸກຄົນ (ຜູ້ອຳນວຍການ) ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຕົວແທນຂອງນິຕິບຸກຄົນ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

(ຜູ້ອຳນວຍການ) ທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

(2) ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກິດລະບຽບບໍລິສັດ ແລະ ໃບທະບຽນອາກອນ (ປີສຸດທ້າຍ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຕົວແທນຂອງນິຕິບຸກຄົນທີ່ເຂົ້າຮ່ວມກອງປະຊຸມ ມີອຳນາດດຳເນີນການແທນນິຕິ ບຸກຄົນທີ່ເປັນຜູ້ຖືຮຸ້ນ ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ).

1.2.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

(1) ໃບມອບສັນທະ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ຊຶ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ.

(2) ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກິດລະບຽບບໍລິສັດ ແລະ ໃບທະບຽນອາກອນ (ປີສຸດທ້າຍ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຕົວແທນຂອງນິຕິບຸກຄົນມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ).

(3) ສຳເນົາເອກະສານທີ່ທາງພາກລັດອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ຕາມຂໍ້ 1.2.1 (1) ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ).

(4) ເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

1.2.3 ກໍລະນີຜູ້ຖືຮຸ້ນເປັນນິຕິບຸກຄົນຕ່າງປະເທດ

(1) ໃຫ້ປະຕິບັດຕາມຂໍ້ 1.2.1 ຫຼື 1.2.2 ແລ້ວແຕ່ກໍລະນີ.

(2) ເອກະສານ ຂອງ ນິຕິບຸກຄົນຕ່າງປະເທດຕ້ອງໄດ້ແປເປັນພາສາລາວ ຫຼື ພາສາອັງກິດ ແລະ ໃຫ້ຕົວແທນຂອງນິຕິບຸກຄົນດັ່ງກ່າວ ລົງລາຍເຊັນຮັບຮອງສະບັບແປເປັນພາສາດັ່ງກ່າວ.

2. ການມອບໝາຍ

ຜູ້ຖືຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດໄດ້ດ້ວຍຕົນເອງ ສາມາດມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນໄດ້ ໂດຍດຳເນີນການດັ່ງນີ້:

2.1 ມອບໝາຍໃຫ້ຜູ້ໃດໜຶ່ງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຫຼື ເລືອກມອບສິດໃຫ້ຜູ້ອຳນວຍການຂອງບໍລິສັດຜູ້ໃດໜຶ່ງ ໂດຍໃຫ້ລະບຸຊື່ພ້ອມລາຍລະອຽດຂອງບຸກຄົນທີ່ຜູ້ຖືຮຸ້ນຕ້ອງການຈະມອບໝາຍ ຫຼື ການເຄື່ອງໝາຍ (✓) ລົງໃນຊ່ອງ □ ໜ້າຊື່ຜູ້ອຳນວຍການ ຕາມທີ່ລະບຸໄວ້ໃນໃບມອບສັນທະ ໂດຍເລືອກພຽງຜູ້ດຽວໃຫ້ເປັນຜູ້ຮັບມອບໝາຍໃນການເຂົ້າຮ່ວມກອງປະຊຸມດັ່ງກ່າວ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

2.2 ນຳສົ່ງໃບມອບສັນທະຄືນ ພະແນກເລຂານຸການບໍລິສັດ ກ່ອນວັນທີ **24 ກໍລະກົດ 2020** ຫຼື ກ່ອນເວລາເປີດກອງປະຊຸມຢ່າງໜ້ອຍໜຶ່ງຊົ່ວໂມງ ເພື່ອໃຫ້ເຈົ້າໜ້າທີ່ຂອງບໍລິສັດໄດ້ມີເວລາກວດກາເອກະສານ ເພື່ອໃຫ້ທັນເວລາເປີດກອງປະຊຸມ.

ໃນນີ້, ຜູ້ຖືຮຸ້ນບໍ່ສາມາດແບ່ງແຍກຈຳນວນຮຸ້ນໂດຍມອບໝາຍໃຫ້ຜູ້ຕາງໜ້າຫຼາຍຄົນ ເພື່ອແບ່ງການລົງຄະແນນສຽງໄດ້ ແລະ ຜູ້ຖືຮຸ້ນຈະຕ້ອງມອບໝາຍເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ ໂດຍບໍ່ສາມາດມອບໝາຍພຽງບາງສ່ວນໜ້ອຍກວ່າຈຳນວນທີ່ຕົນຖືຢູ່ໄດ້.

3. ການລົງທະບຽນ

ບໍລິສັດຈະເລີ່ມເປີດຮັບລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2020 ຂອງ ບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ ກ່ອນເປີດກອງປະຊຸມ 2 ຊົ່ວໂມງ ຫຼື ຕັ້ງແຕ່ເວລາ 13:30-15:00 ໂມງ ເປັນຕົ້ນໄປ ໃນວັນທີ **24 ກໍລະກົດ 2020** ທີ່ຫ້ອງປະຊຸມຊັ້ນ 1 ອາຄານສຳນັກງານລັດວິສາຫະກິດໄຟຟ້າລາວ ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫລວງວຽງຈັນ ຕາມແຜນທີ່ທີ່ຄັດຕິດມາພ້ອມ.

ໃນນີ້, ໃນແຕ່ລະວາລະປະຊຸມ ກ່ອນເລີ່ມການລົງຄະແນນ ບໍລິສັດຈະປິດຮັບລົງທະບຽນເປັນການຊົ່ວຄາວ ແລະ ຈະເປີດຮັບລົງທະບຽນອີກເມື່ອການນັບຄະແນນຂອງແຕ່ລະວາລະປະຊຸມສຳເລັດແລ້ວ.

4. ການລົງຄະແນນສຽງໃນກອງປະຊຸມສາມັນຜູ້ຖືຮຸ້ນ

4.1 <u>ຫຼັກການລົງຄະແນນສຽງ</u>

(1) ໜຶ່ງຮຸ້ນເທົ່າກັບໜຶ່ງສຽງ ແລະ ຜູ້ຖືຮຸ້ນຈະຕ້ອງລົງຄະແນນສຽງເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ.

(2) ບໍລິສັດ ຈະຈັດໃຫ້ມີບັດລົງຄະແນນ (Ballots) ສຳຫຼັບທຸກໆ ວາລະປະຊຸມ ທີ່ຕ້ອງມີການລົງຄະແນນສຽງ ໂດຍບໍລິສັດຈະແຈກບັດລົງຄະແນນໃຫ້ຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າທຸກຄົນ ໃນເວລາທີ່ລົງທະບຽນ, <u>**ຍົກເວັ້ນ**</u> ສຳລັບຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະ ແນນສຽງມາໃນໃບມອບສັນທະຢ່າງຈະແຈ້ງແລ້ວ ບໍລິສັດຈະບໍ່ແຈກບັດລົງຄະແນນໃຫ້ແກ່ຜູ້ຕາງໜ້າດັ່ງກ່າວ, ໃນນີ້ ຜູ້ທີ່ມາລົງທະບຽນຫຼັງຈາກເວລາທີ່ກອງປະຊຸມຜູ້ຖືຮຸ້ນໄດ້ເປີດກອງປະ ຊຸມໄປຕາມລະບຽບວາລະປະຊຸມບາງສ່ວນແລ້ວ, ຈະໄດ້ຮັບບັດລົງຄະແນນສະເພາະວາລະປະ ຊຸມທີ່ເຫຼືອຢູ່ເທົ່ານັ້ນ.

4.2 <u>ວິທີປະຕິບັດໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ</u>

ໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ ເພື່ອບໍ່ໃຫ້ເປັນການເສຍເວລາ ຂອງ ຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າທັງໝົດ, ປະທານໃນກອງປະຊຸມຈະຖາມວ່າ ມີຜູ້ໃດບໍ່ເຫັນດີ ຫຼືບໍ່ ຜູ້ທີ່ເຫັນດີບໍ່ຕ້ອງການເຄື່ອງໝາຍໃດໆ ລົງໃນບັດລົງຄະແນນ (Ballots) ສ່ວນຜູ້ທີ່ບໍ່ເຫັນດີກັບວາລະປະຊຸມດັ່ງກ່າວ ໃຫ້ການເຄື່ອງໝາຍ (✓) ລົງໃນຊ່ອງ □ ບໍ່ເຫັນດີ ໃນບັດລົງຄະແນນ ພ້ອມລົງລາຍເຊັນໃນບັດລົງຄະແນນ ແລະ ຍົກມືຂຶ້ນ ເພື່ອສົ່ງມອບໃຫ້ແກ່ເຈົ້າໜ້າທີ່ຂອງບໍລິ ສັດ ເພື່ອນຳໄປກວດນັບ, ຍົກເວັ້ນ ສຳລັບຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບສັນທະຢ່າງຈະແຈ້ງແລ້ວ ບໍລິສັດຈະບັນທຶກຄະແນນສຽງດັ່ງກ່າວຕັ້ງແຕ່ເວລາ ຜູ້ທີ່ຕາງໜ້າລົງທະບຽນເຂົ້າຮ່ວມກອງປະຊຸມ.

ໃນນີ້, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງຈາກທີ່ປະທານໄດ້ປະກາດໃຫ້ກອງປະຊຸມຊາບຜົນການລົງຄະແນນສຽງ ໃນແຕ່ລະວາລະປະຊຸມສິ້ນສຸດລົງແລ້ວ, ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວມາລວມ ເປັນຄະແນນສຽງອີກ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

4.3 ການນັບຄະແນນສຽງ ແລະ ການແຈ້ງຜົນການນັບຄະແນນ

ຜູ້ອຳນວຍການໃຫຍ່ຂອງບໍລິສັດ ຈະເປັນຜູ້ອະທິບາຍວິທີການນັບຄະແນນສຽງ ໃຫ້ກອງປະຊຸມຮັບຊາບ ກ່ອນເລີ່ມວາລະປະຊຸມ ໂດຍບໍລິສັດຈະນັບຄະແນນສຽງ ແລະ ແຈ້ງຜົນການນັບຄະແນນໃຫ້ກອງປະຊຸມຮັບຊາບ ກ່ອນສິ້ນສຸດການປະຊຸມໃນແຕ່ລະວາລະ.

ໃນນີ້, ບໍລິສັດຈະໃຊ້ວິທີຫັກຄະແນນສຽງທີ່ບໍ່ເຫັນດີອອກຈາກຈຳນວນສຽງທັງໝົດ ແລະ ສ່ວນທີ່ເຫຼືອຈະຖືເປັນຄະແນນສຽງທີ່ເຫັນດີ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ແຜນທີ່ ຂອງສະຖານທີ່ຈັດກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2020
Map of the Meeting Place



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la